# ການຈັດຕັ້ງຣັຖບານລາວອິສຣະ

## ວັນທີ ໑໒ ຕຸລາ ໑໙໔໕

ກ່ອນຈະໄດ້ມີການຈັດຕັ້ງຣັຖບານລາວອິສຣະຂຶ້ນ ໃນວັນທີ່ 12 ຕຸລາ 1945 ເພື່ອຕໍ່ຕ້ານຂັດຂວາງການກັບຄືນມາເປັນນາຍຂອງຝຣັ່ງເສດ ແລະປະກາດຄວາມເປັນເອກຣາດຂອງລາວຢ່າງສົມບູນ ບໍ່ເປັນເມືອງຂຶ້ນຂອງປະເທດໃດນັ້ນ ຂໍທົບທວນກ່າວເຖິງມູນເຊື້ອທີ່ມາໃຫ້ມີການຈັດຕັ້ງຣັຖບານລາວອິສຣະຂຶ້ນດັ່ງແຣກກ່ອນ ພໍໃຫ້ຮູ້ຄວາມເປັນມາຕິດຕໍ່ກັນຄື :

ເມື່ອມະຫາສົງຄາມໂລກຄັ້ງທີ່ສອງ ໄດ້ອຸບັດຂຶ້ນໃນທະວີບຢູໂຣບ ແລະຕໍ່ມາໃນປີ ຄ.ສ. 1941 ປະເທດໄທຍໄດ້ຮຽກຮ້ອງຂໍເອົາດິນແດນລາວຄືນຈາກຝຣັ່ງເສດ ຈົນຝຣັ່ງເສດກັບໄທຍໄດ້ຣົບເຣອກັນຂຶ້ນນັ້ນ ໄດ້ມີຄົນລາວຈຳນວນນຶ່ງທີ່ຢູ່ໃນນະຄອນວຽງຈັນ ຖືກທາງການຝຣັ່ງເສດສົງສັຍວ່າຈະເປັນພັຍຕໍ່ທາງການເມືອງຂອງຕົນແລ້ວຈະທຳການຈັບກຸມ ບຸກຄົນເຫລົ່ານັ້ນຈຶ່ງໄດ້ຂ້າມໜີໄປຢູ່ປະເທດໄທຍ ພວກທີ່ຂ້າມໄປນັ້ນມີປະມານ 50 ຄົນເສດ ແລະໄດ້ໃຫ້ຊື່ຄນະຂອງຕົນວ່າຄນະ ກ.ອ.ພ. (ຄນະກູ້ອິສຣະພາບ) ບັນດາຜູ້ທີ່ເປັນແນວໜ້າພາຂ້າມໄປນັ້ນກໍ່ມີ ທ້າວທັນ(ນາຍພົນທັນ) ທ້າວອຸດອນ(ນາຍພົນອຸດອນ) ທ້າວອຸ່ນ(ທ້າວ

ອຸ່ນ ຊນະນິກອນ) ມະຫາສິທາ ວີຣະວົງສ໌ ທ້າວບົງ (ພັນເອກບົງ ສຣີສັຕນະກຸນ) ທ້າວບົວຈັນ ອິນທະວົງ (ອະດີດຜູ້ແທນຣາສດອນ) ທ້າວຄຳໃບ ພິລາພັນເດດ (ພະຍາຄຳໃບ ພິລາພັນເດດ) ທ້າວຈັນທະລີ (ທ້າວມະລີ) ເປັນຕົ້ນ ແຕ່ພວກທີ່ບໍ່ໄດ້ຂ້າມໄປ ພ່ຳລົບຫລີກພົກຕົວຢູ່ໄດ້ມີຈຳນວນຫລາຍ ເຊິ່ງບໍ່ສາມາດຈະຈື່ຈຳໄດ້ແລະອອກຊື່ສຽງໃຫ້ຄົບຖ້ວນໃນທີ່ນີ້ໄດ້.

ຄັນມາເຖິງ ຄ.ສ. 1942 ເມື່ອໄທຍໄດ້ປະກາດສົງຄາມຕໍ່ຝ່າຍສັມພັນທະມິດ ໂດຍຮ່ວມມືກັບຍີ່ປຸ່ນນັ້ນ ໄດ້ມີຄົນໄທຍຈຳນວນນຶ່ງ ອັນມີນາຍປຣີດີ ພະນົມຍົງ ຜູ້ສຳເຣັດຣາຊການແຜ່ນດິນແທນພຣະອົງເປັນຫົວໜ້າ ບໍ່ເຫັນດີນຳການປະກາດສົງຄາມຕໍ່ຝ່າຍສັມພັນທະມິດ ຂອງຣັຖບານນາຍພົນ ປ. ພິບູນສົງຄາມ ຈຶ່ງຄິດຈັດຕັ້ງຂະບວນການເສຣີໄທຍຂື້ນ ທຳການຕໍ່ຕ້ານຍີ່ປຸ່ນຊ່ວຍຝ່າຍສັມພັນທະມິດ ເພື່ອກູ້ອິສຣະພາບຂອງໄທຍໄວ້ ຄນະລາວພັດຖິ່ນ (ຄນະ ກ.ອ.ພ.) ຈຸທີ່ກ່າວມາແລ້ວນັ້ນ ເຊິ່ງມີຊັ້ນແນວໜ້າ ຄື ທ້າວທັນ (ນາຍພົນທັນ) ທ້າວບົວຈັນ (ອະດີດຜູ້ແທນບົວຈັນ ອິນທະວົງ) ທ້າວບົງ (ອະດີດພັນເອກບົງ) ທ້າວອຸ່ນ ຊນະນິກອນ ມະຫາສິທາວີຣະວົງສ໌ ທ້າວຄຳໃບ (ພະຍາຄຳໃບພິລາພັນເດດ) ເປັນຕົ້ນ ຈຶ່ງໄດ້ເຂົ້າປະຊຸມກັນຢູ່ເຮືອນພັກຂອງທ້າວບົວຈັນ ທີ່ເມືອງໜອງຄາຍ ຮັບແລະເຫັນດີນຳການຊັກຊວນຂອງບັນດາຫົວໜ້າເສຣີໄທຍທີ່ເປັນຄົນອີສານ ອັນມີນາຍຕຽງ ສິຣິຂັນ ນາຍຖວິນ ອຸດົມ ນາຍຈຳລອງ ດາວເຮືອງ ແລະ ນາຍທອງອິນ ພູຣິພັດ ເປັນຕົ້ນ ທີ່ໃຫ້

ຈັດຕັ້ງຂະບວນການເສຣີລາວອົ້ນໃນປະເທດລາວ ເພື່ອຕໍ່ຕ້ານຍີ່ປຸ່ນນຳກັນ ດັ່ງນັ້ນຄະນະລາວພັດຖິ່ນຈູ່ທີ່ກ່າວນີ້ ຈຶ່ງໄດ້ປະຊຸມກັນຈັດຕັ້ງຂະບວນການເສຣີລາວອົ້ນຄືກັບເສຣີໄທຍ ແຕ່ເພື່ອບໍ່ໃຫ້ຊື່ໃກ້ກັນຫລືຄືກັນກັບ "ເສຣີໄທຍ" ຈຶ່ງໄດ້ໃສ່ຊື່ວ່າ *"ຄນະລາວອິສຣະ"* ຕັ້ງແຕ່ເວລານັ້ນມາ.

ແຜນການຂອງຄນະລາວອິສຣະຄັ້ງແຮກ ກໍແມ່ນຈະຂ້າມມາເລືອກຫາບ່ອນຕັ້ງກອງບັນຊາການ ແລະສຳນັກງານຢູ່ໃນປະເທດລາວ ເມື່ອເລືອກຫາບ່ອນຕັ້ງກອງບັນຊາການແລະສຳນັກງານໄດ້ແລ້ວ ຈຶ່ງຈະລາຍງານໄປໃຫ້ກອງບັນຊາການໃຫຍ່ ຂອງຝ່າຍສັມພັນທະມິດທີ່ຕັ້ງຢູ່ໃນປະເທດຈີນ ເພື່ອໃຫ້ຝ່າຍສັມພັນທະມິດສົ່ງອາວຸດຍຸທພັນມາໃຫ້ ແລະພ້ອມກັນນີ້ ກໍໄດ້ທຳການໂຄສະນາຊັກຊວນອອນຈູງເອົາປະຊະຊາຈີນໃນທົ່ວປະເທດຮ່ວມມືນຳ ເມື່ອໄດ້ເຫັນດີແລະຕົກລົງກັນຢ່າງນີ້ແລ້ວ ທີ່ປະຊຸມຈຶ່ງໄດ້ມອບໝາຍໃຫ້ທ້າວທັນ (ນາຍພົນທັນ) ເປັ່ນຫົວໜ້າຮັບຜິດຊອບດ້ານທະຫານແລະການເມືອງ ຂ້າມມາປະເທດລາວ ຊອກຫາບ່ອນຕັ້ງສນາມບິນແລະກອງບັນຊາການ ຜາກົດວ່າເລືອກໄດ້ທີ່ພູເຂົາຄວາຍດ້ານຕາເວັນອອກ (ຊື່ກັບຖ້ຳຍາຄຣູລືທັດ) ເມື່ອເລືອກຫາສະຖານທີ່ຕັ້ງກອງບັນຊາການໄດ້ແລ້ວ ທ້າວທັນກໍກັບຄືນໄປລາຍງານໃຫ້ຄນະຮູ້ ແລະສົ່ງລາຍງານນັ້ນໄປຍັງກອງບັນຊາການຝ່າຍສັມພັນທະມິດທີ່ປະເທດຈີນ.

## ຢີ່ປຸ່ນຍອມ

ໃນລະຫວ່າງຄນະລາວອິສຣະ ຄອຍຖ້າຮັບຄຳຕອບຈາກກອງບັນຊາການສູງສຸດຂອງພັນທະມິດທີ່ປະເທດຈີນ ແລະຮັບເອົາເຄື່ອງຍຸທສັມພາຣະຢູ່ນັ້ນ ມັນເປັນເວລາທີ່ຝ່າຍອັກສະ ພວມຖອຍຢູ່ທຸກດ້ານ ເພາະຖືກຝ່າຍພັນທະມິດຕີຕອບໂຕ້ຄືນ ຄື ໃນດ້ານຍຸໂຣບ ກອງທະຫານຝ່າຍສັມພັນທະມິດ "ອັງກິດ–ອະເມຣິກາ ຍົກພົນຂຶ້ນບົກໄດ້ຫລາຍບ່ອນຕາມຝັ່ງທະເລດ້ານຕາເວັນຕົກຂອງຝຣັ່ງເສດ ຕໍ່ມາກອງທັບຝ່າຍສັມພັນທະມິດກໍ່ເຂົ້າຍຶດເອົາກຸງໂຣມຂອງ ອິຕາລີ ໄວ້ໄດ້.

ເມື່ອຍຶດເອົາອິຕາລີໄດ້ແລ້ວ ກອງທັບພັນທະມິດກໍ່ບຸກເຂົ້າຝຣັ່ງເສດແລະຍຶດໄດ້ນະຄອນປາຣີສ໌ ຄືນໃນວັນທີ 30 ສິງຫາ 1944 ປະຊາກອນໃນຝຣັ່ງເສດ ໄດ້ອອກມາທຳການຕ້ອນຮັບກອງທັບພັນທະມິດຢ່າງລົ້ນເຫລືອ ນາຍພົນເດີໂກລ ໄດ້ຮັບການຕ້ອນຮັບຈາກຝຣັ່ງເສດຢ່າງສຸດໃຈ ເພາະນາຍພົນເດີໂກລເປັນວິຣະບຸຣຸດຂອງຝຣັ່ງເສດ ທີ່ໄດ້ຈັດຕັ້ງຣັຖບານຝຣັ່ງເສດເສຣີຂຶ້ນໃນປະເທດອັງກິດ ແລະປົດປ່ອຍປະເທດຝຣັ່ງເສດໃຫ້ພົ້ນຈາກການເປັນທາດຂອງເຢີຣະມັນ

ຕໍ່ມາໃນວັນທີ 7 ພຶສພາ 1944 ກອງບັນຊາການຝ່າຍພັນທະມິດ ກໍ່ໄດ້ປະກາດເປັນທາງການວ່າກອງທັບເຢີຣະມັນໄດ້ຍອມແລ້ວ ໂດຍປາສຈາກເງື່ອນໄຂທັງພົດ ແລະຕໍ່ມາໃນວັນທີ ໙ ພຶສພາ 1944 ນັ້ນເອງ ເງື່ອນໄຂຂອງການຍອມພ່າຍຂອງເຢີຣະມັນ ກໍ່ໄດ້ຮັບການສັຕຍາບັນໃນ ກຣຸງເບີລິນ

ນີ້ແມ່ນການອະວະສານແຫ່ງມະຫາສົງຄາມດ້ານຢຸໂຣບ

ຝ່າຍທາງພາກພື້ນເອເຊັຽ ຍີ່ປຸ່ນຜູ່ເປັນພັນທະມິດກັບເຢັຣະມັນ ແລະອິຕາລີ ກໍໄດ້ຖືກກອງທັບຝ່າຍສັມພັນທະມິດບຸກແຫລກມາແຕ່ວັນທີ 9 ມະກະຣາ 1945 ຄື ກອງທັບຂອງນາຍພົນແມັຄອາເທີ ສາມາດຍົກພົນຂຶ້ນບົກໄດ້ທີ່ຊານເຟນຽນແລະລິງກາເຢັນ ຕໍ່ມາໃນລະຫວ່າງວັນທີ 19 ກຸມພາ ກໍສາມາດຍົກພົນຂຶ້ນທີ່ ອີໂວຊິມາ ໄດ້ອີກບ່ອນນຶ່ງ ຈົນເຖິງວັນທີ 19 ມີນາ 1945 ຝູງຍົນຖິ້ມລູກແຕກຂນາດໜັກຂອງອະເມຣິກາ ກໍໄປຫວ່ານລູກແຕກລົງໃສ່ພາກພື້ນພາກໃຕ້ ແລະພາກຕາເວັນອອກຂອງກີວຊີ.

ເຖິງວັນທີ 1 ເມສາ 1945 ກອງທັບນາຍພົນແມັຄອາເທີ ກໍຍົກພົນຂຶ້ນບົກທີ່ ໂອກີນາວາ

ວັນທີ 20 ເມສາ ກອງທັບອະເມຣິກາ ກໍຍົກພົນຂຶ້ນບົກທີ່ຣິເຢ ທາງຕາເວັນຕົກຂອງ ໂອກີນາວາ ໄດ້ອີກ.

ໃນລະຍະຕັ້ງແຕ່ນັ້ນມາຈົນເຖິງເວລາຍີ່ປຸ່ນຍອມ ຝູງຍົນເຫາະອະເມຣິກາ ໄດ້ເຂົ້າທະລາຍຍີ່ປຸ່ນໜັກຂຶ້ນເປັນທະວີຄູນທົ່ວໄປໃນເກາະຍີ່ປຸ່ນ ຈົນໃນທີ່ສຸດ ສະຫະພາບໂຊວຽດ ເຊິ່ງໄດ້ສັນຍາກັນໄວ້ກັບຍີ່ປຸ່ນ ວ່າຈະບໍ່ຮຸກຮານກັນ ເມື່ອເຫັນວ່າອະເມຣິກາບຸກຂຶ້ນຍີ່ປຸ່ນໄດ້ ແລະໂຈມຕີຍີ່ປຸ່ນແຫລກແຫລວໄປແລ້ວ ກໍປະກາດສະຖານະການສົງຄາມກັບຍີ່ປຸ່ນທັນທີ.

ໃນລະຍະນັ້ນເອງ ຄນະລາວອິສຣະ ກໍໄດ້ຮັບແຈ້ງຈາກນາຍທະ

ທານຝ່າຍພັນທະມິດ ທີ່ປະຈຳຢູ່ດ້ວອພອງຄົມຄູ ຈັງຫວັດສາກົນນະຄອນ ວ່າ "ການທີ່ລາວຍື່ນຄຳຮ້ອງ ໄປຍັງກອງບັນຊາການພັນທະມິດທີ່ປະເທດຈີນ ເພື່ອຂໍເຄື່ອງຍຸດທະສັມພາຣະແລະເຈີນມາຈັດຕັ້ງຄ້າຍຂົ້ນໃນດິນແດນລາວນັ້ນ ໃຫ້ຄອຍພັ່ງໄປກ່ອນ ເພາະດຽວນີ້ພາກົດວ່າ ຍີ່ປຸ່ນອ່ອນແຮງລົງແລ້ວ ອາດຈະອ່ອນຍອມຕໍ່ຝ່າຍສັມພັນທະມິດໃນໄວໆນີ້ກໍໄດ້" ເມື່ອຄນະລາວອິສຣະ ໄດ້ຮັບແຈ້ງຄວາມແບບນີ້ແລ້ວ ກໍໄດ້ທະວີແຜນປະຕິບັດດ້ານການເມືອງຕໍ່ໄປ ພໍມາເຖິງວັນທີ 15 ສິງຫາ 1945 ນີ້ເອງ ຍີ່ປຸ່ນກໍປະກາດຂໍຍອມຕໍ່ຝ່າຍສັມພັນທະມິດຢ່າງບໍ່ມີເງື່ອນໄຂ ເພາະອະເມຣິກາໄດ້ເອົາລູກແຕກປະຣະມານູໄປຖິ້ມໃສ່ພຽງສອງລູກທ່ນັ້ນ ລູກທຳອິດຖິ້ມໃສ່ເມືອງຮິໂຣຊິມາ ເມື່ອວັນທີ 6 ສິງຫາ 1945 ທີ່ເມືອງນີ້ມີຄົນຕາຍນັບເບັ້ນແສນ ບ້ານເມືອງພັງທະລາຍນັບບໍ່ຖ້ວນ ຍ້ອນລູກແຕກປະຣະມະນູລູກດຽວທ່ນັ້ນ.

ຕໍ່ມາເຖິງວັນທີ 8 ສິງຫາ 1945 ອະເມຣິກາໄດ້ຖິ້ມລູກແຕກອະຣະມະນູລູກທີ່ສອງ ລົງໃສ່ເມືອງ ນາກາຊາກິ ທີ່ເມືອງນີ້ກໍມີຄົນຕາຍນັບແສນ ເຮືອນຊານບ້ານຊ່ອງພັງທະລາຍລົງຈົນເກືອບໝົດ ສົມເດັດພຣະເຈົ້າຈັກກະພັດຍີ່ປຸ່ນ ທົງສັງເວດພຣະທັຍໃນເຫດອັນນີ້ ທົນຕໍ່ໄປບໍ່ໄດ້ ຈຶ່ງຕົກລົງພຣະທັຍຍິນຍອມເມື່ອວັນທີ 15 ສິງຫາ 1945 ຈຶ່ງເບັ້ນອັນວ່າ ມະຫາສົງຄາມໂລກຄັ້ງທີສອງໄດ້ຍຸຕິລົງ ແຕ່ວັນທີ 15 ສິງຫາ 1945 ເບັ້ນຕົ້ນມາ.

# ຄນະລາວອິສຣະຣຸ່ນແຣກ ຕິດຕໍ່ກັບເຈົ້າ ມະຫາອຸປຣາຊເພັຊຣາຊ

ເມື່ອມະຫາສົງຄາມໂລກໄດ້ສງົບລົງ ໂດຍຝ່າຍຍີ່ປຸ່ນເປັນຜູ້ພ່າຍແພ້ຝ່າຍສັມພັນທະມິດດັ່ງນີ້ແລ້ວ ຄວາມຫວັງຂອງຄນະລາວອິສຣະທີ່ຈະໄດ້ເຄື່ອງຍຸທສັມພາຣະ ແລະຄວາມສນັບສນູນດ້ານການເງິນຈາກຝ່າຍສັມພັນທະມິດກໍ່ເປັນອັນສ້ຽງສຸດລົງ ເມື່ອເປັນດັ່ງນີ້ຄນະລາວອິສຣະຣຸ່ນແຣກນີ້ກໍໄດ້ເຂົ້າປະຊຸມກັນອີກ ໃນການປະຊຸມເທື່ອນີ້ ຄນະມີຄວາມເຫັນວ່າ ເຮົາຄວນຍື່ນຄຳຮ້ອງຕໍ່ຝ່າຍສັມພັນທະມິດ ອັນມີອັງກິດກັບອະເມຣິກາເປັນຫົວໜ້າ ຂໍໃຫ້ປະເທດລາວ ໄດ້ຮັບຄວາມເປັນເອກຣາດຕາມເງື່ອນໄຂຂອງກົດບັດແອຕແລນຕິດ ທີ່ 5 ປະເທດມະຫາອຳນາດ (ອັງກິດ ອະເມຣິກາ ຣັດເຊັຽ ຈີນ ແລະຝຣັ່ງເສດພັດຖຸນ) ໄດ້ສັນຍາກັນໄວ້ໃນວັນທີ 11-2-1945 "ທີ່ກ່າວວ່າ ເມື່ອມະຫາສົງຄາມໂລກເທື່ອທີ່ 1 ໄດ້ສງົບລົງ ຈະໃຫ້ບັນດາປະເທດທັ້ງຫລາຍທີ່ເປັນຫົວ ຫົວເມືອງຂຶ້ນ ໄດ້ເປັນເອກຣາຕ" ດັ່ງນີ້ແຕ່ການຍື່ນຄຳຮ້ອງດັ່ງກ່າວນີ້ ລາວອິສຣະຣຸ່ນແຣກນີ້ເຮັດບໍ່ໄດ້ ເພາະຄນະລາວອິສຣະຍັງບໍ່ເປັນຕົນເປັນໂຕ ບໍ່ທັນໄດ້ຮັບຄວາມປະກັນ ຫລືຮັບຮອງຈາກປະເທດໃດປະເທດນຶ່ງ ທີ່ພາກົດແກ່ສາຍຕາຂອງໂລກ

ດັ່ງນັ້ນທາງທີ່ຄວນແລ້ວ ກໍຄວນໃຫ້ເຈົ້າມະຫາອຸປຣາຊເພັຊຣາຊ ເປັນຜູ້ຍື່ນຄຳຮ້ອງຂໍ ເພາະພຣະອົງດຳຣົງຕຳແໜ່ງນັ້ນນາຍົກຣັຖ

ມົນຕຣີຂອງຣັຖບານລາວຫລວງພຣະບາງ ເຊິ່ງແຕ່ເດີມຢູ່ພາຍໃຕ້ການເບິ່ງແຍງຂອງຝຣັ່ງເສດ ເມື່ອຝຣັ່ງເສດພ່າຍພ້ຍີ່ປຸ່ນ ແລ້ວຣັຖບານນີ້ກໍຕົກຢູ່ພາຍໃຕ້ການເບິ່ງແຍງຂອງຍີ່ປຸ່ນ ແລະເມື່ອຍີ່ປຸ່ນພ່າຍແພ້ສັມພັນທະມິດດັ່ງນີ້ແລ້ວ ຣັຖບານຂອງເຈົ້າມະຫາຊີວິດສຣີສວ່າງວົງກໍພົດສະພາບໄປເອງ ເມື່ອປຶກສາກັນເຫັນດີດັ່ງນີ້ແລ້ວ ຄນະລາວອິສຣະ ຈຶ່ງໄດ້ແຕ່ງໃຫ້ທ້າວບຸນມີ ບົ້ມຍາທິບ (ພັນຕໍາຣວດຕຣີບຸນມີ ບົ້ມຍາທິບ) ຂ້າມມາຕິດຕໍ່ກັບເຈົ້າເພັຊຣາຊທີ່ວຽງຈັນ ທູນໃຫ້ຊາບວ່າ ຄນະລາວອິສຣະຂໍມາເຝົ້າເພື່ອເຈຣະຈາບັນຫາການເມືອງທີ່ສໍາຄັນຍິ່ງໃນເວລາອັນໄວດ້ວຍ ເຈົ້າມະຫາອຸປຣາຊເພັຊຣາຊ ໄດ້ຮັບຊາບຄວາມປະສົງຂອງຄນະລາວອິສຣະ ດັ່ງນັ້ນກໍພ້າວຈັດສົ່ງທ້າວບຸນມີ ຂ້າມຄືນໄປບອກທັນທີ ແລະພຣະອົງນັດໃຫ້ໄປພົບກັນຢູ່ເສັ້ນທາງໄປຫລວງພຣະບາງ ລະຫວ່າງຫລັກກິໂລແມດທີ 7 (ໂຮງເລື່ອຍຄໍາໃບທຸກອັນນີ້) ໂດຍພຣະອົງບອກວ່າຈະຂີ່ຣົດຍົນໄປຕາມທາງ ແລະໃຫ້ພວກຄນະລາວອິສຣະທີ່ຈະໄປພົບພໍ້ຕາມທາງນັ້ນ ແຕ່ງຕົວເປັນຊາວນາເດີນທາງໄປເພາະວ່າ ເວລານັ້ນ ຍີ່ປຸ່ນຍັງບໍ່ທັນວາງອາວຸດເທື່ອເຖິງແມ່ນໄດ້ຍອມແລ້ວກໍຕາມ ຍີ່ປຸ່ນກໍຍັງຖືປືນຢືນຍາມຢູ່ສນາມບິນວັດໄຕແລະຕາມຖນົນຫົນທາງທົ່ວໄປ ເມື່ອໄດ້ຊາບດັ່ງນີ້ ມະຫາສິລາ ວິຣະວົງສ໌ ທ້າວບົງ ສຣີຣັຕນະກູນ ( ພອ ບົງ ອັຍການສານທະຫານ ) ທ້າວບຸນມີ ບົ້ມຍາທິບ (ພຕຕ ບຸນມີ ບົ້ມຍາທິບ) ຈຶ່ງໄດ້ຈ້າງເຮືອຖີ່ຈາກເມືອງພອງຄາຍລັດມາຕາມບ້ານແກ່ງ ຈົນເຖິງບ້ານໝໍ້ ແລ້ວຂ້າມມາຖ້າພົບພໍ້ເຈົ້າເພັຊຣາຊ ຕາມເສັ້ນທາງທີ່ພຣະອົງນັດໄວ້

ໃນລະຫວ່າງວັນທີ 20 ສິງຫາ 1945 ຄນະໄດ້ພົບເຈົ້າສຸວັນນະພູມາ (ສເດັດເຈົ້າສຸວັນນະພູມາ ນາຍົກຣັຖມົນຕຣີປັດຈຸບັນ) ແຈ້ງຄວາມປະສົງໃຫ້ຊາບ ເຈົ້າສຸວັນນະພູມາບອກໃຫ້ໄປເຊົາຢູ່ບ້ານຈານເບັ້ງ ຕາແສງສີໄຄ ຄອຍຖ້າຄຳຕອບ ຫລືຮັບເອົາເອກສານຮ້ອງຂໍຄວາມເປັນເອກຣາດຈາກເຈົ້າມະຫາອຸປຣາດເພັຊຣາຊ ເພື່ອນຳໄປຍື່ນໃຫ້ຕົວແທນຂອງຊາຕສັມພັນທະມິດ ຄື ອັງກິດແລະອະເມຣິກາ ເມື່ອຖ້າຢູ່ 2 ວັນ ເຈົ້າສົມສນິດ (ອະດີດນາຍົກຣັຖມົນຕຣີປີ 1960) ກໍນຳເອົາຊອງເອກສານໄປມອບໃຫ້ 3 ຊອງ ຊອງໜຶ່ງເຖິງນາຍທະຫານ ຕົວແທນອະເມຣິກາປະຈຳຈັງຫວັດສາກົນນະຄອນ ຊອງໜຶ່ງເຖິງກັບປິແຕນ ອິນ ຕົວແທນທະຫານອັງກິດປະຈຳຈັງຫວັດເມືອງໜອງຄາຍ ຊອງໜຶ່ງເຖິງນາຍປະກອນ ອັງສຸສິງ ຂ້າຫລວງປະຈຳຈັງຫວັດໜອງຄາຍ ໂດຍຂໍໃຫ້ຕົວແທນດັ່ງກ່າວນີ້ ນຳເອກສານຮ້ອງຂໍຄວາມເປັນເອກຣາດສົ່ງໃຫ້ຣັຖບານຂອງໃຜລາວ ຕໍ່ຈາກນັ້ນມາ ຄນະກໍໄດ້ຈັດຕັ້ງສຳນັກງານລາວພັນທະມິດຂຶ້ນທີ່ກະຊວງຖະແຫລງຂ່າວດຽວນີ້ ເພື່ອເປັນສູນການເມືອງຕິດຕໍ່ກັບຝ່າຍສັມພັນທະມິດ ເພາະເວລານັ້ນ ຝ່າຍສັມພັນທະມິດຄື ອັງກິດ ຣັດເຊັຍ ອະເມຣິກາ ຈີນ ແລະຝລັ່ງເສດ ເປັນຝ່າຍຟາຍແພ້ແລະຖ້າຫາກຊາດເຫລົ່ານີ້ເຂົ້າມາໃນລາວໆກໍ່ຍິນດີຮັບຕ້ອນ ໂດຍສເມີພາບ ທັງນີ້ກໍເພື່ອຢາກໃຫ້ຝ່າຍສັມພັນທະມິດ ເຫັນໃຈນັ້ນເອງນອກຈາກນີ້ແລ້ວກໍດຳເນີນການຊັກຊວນຊາວໜຸ່ມເຕົ້າໂຮມ ບັນດາບຸກຄົນສຳຄັນໆຊຶ່ງມີອາວຸໂສທີ່ຢູ່ໃນນະຄອນວຽງຈັນ ໃຫ້ພ້ອມຈິດພັນໃຈກັນທຳການກູ້ຊາດ ປະກາດ

ຄວາມເປັນເອກຣາດຂອງລາວອຂ໌ນໂດຍໄວ ພ້ອມດຽວກັນນີ້ກໍໄດ້ຈັດຕັ້ງກອງທະຫານລາວອຂ໌ນ ໂດຍມອບໝາຍໃຫ້ອະດີດນາຍພົນສິງ (ເວລານີ້ມີຍົດເປັນນາຍຮ້ອຍຕຣີ) ໃຫ້ເປັນຜູ້ບັງຄັບບັນຊາ ເກັບທ້ອນເອົາອາວຸດເກົ່າຂອງຍີ່ປຸ່ນ ທີ່ຍີ່ປຸ່ນປະໄວ້ ຕັ້ງເປັນກອງທະຫານອຂ໌ນ ຄົນທັງຫລາຍຮຽກວ່າ ກອງທະຫານດຳ ເພາະໃຊ້ເສື້ອສີດຳ.

## *ຝຣັ່ງເສດຄືນຊີບ.*

ໃນຂະນະທີ່ພວກລາວອິສຣະ ຫລືຄນະຜູ້ກໍ່ການຈັດຕັ້ງຣັຖບານລາວອິສຣະ ພວມຂຸ້ນຂ້ຽວຈັດວຽກການເພື່ອກຽມການຈັດຕັ້ງຣັຖບານລາວອິສຣະຢູ່ນັ້ນ ພວກຝຣັ່ງເສດທີ່ເປັນຝ່າຍຂ້າຣາຊການພົລເຮືອນຈຳນວນ 60 ຄົນ ທີ່ຍີ່ປຸ່ນຂັງໄວ້ໃນເວລາທີ່ຍີ່ປຸ່ນເຂົ້າມາຍຶດວຽງຈັນນັ້ນ ພໍຮູ້ວ່າຍີ່ປຸ່ນຍອມແລ້ວ ມອງສີເອີ ບຣາໄຊ ອະດີດຂ້າຫລວງຝຣັ່ງເສດປະຈຳລາວ ກໍແຕ່ງຕົວໃສ່ເຄື່ອງແບບມາຫາເຈົ້າເພັຊຣາດ ບອກວ່າວັນທີ່ 1 ກັນຍານີ້ຈະມາປະຕິບັດຣາຊການເປັນຂ້າຫລວງຝຣັ່ງເສດປະຈຳລາວຕາມເດີມ. ເຈົ້າເພັຊຣາດໄດ້ຕອບ ມ. ບຣາໄຊໄປວ່າ ຝຣັ່ງເສດໝົດຂໍ້ຜູກພັນກັບລາວແລ້ວ ເພາະບ້ອງກັນປະເທດລາວບໍ່ໄດ້ ພ່າຍແພ້ຕໍ່ຍີ່ປຸ່ນໄປແລ້ວ ຖ້າຫາກຈະກັບຄືນມາ ກໍຕ້ອງເຈຣະຈາກັນເສັຽກ່ອນ ແລະຣັຖບານຝຣັ່ງເສດຈະຕ້ອງທຳສັນຍາກັນກ່ອນ.

ໃນການທີ່ ມ. ບຣາໄຊ ບອກກັບເຈົ້າເພັຊຣາດວ່າ ຈະມາເປັນຂ້າຫລວງປົກຄອງລາວອີກ ນີ້ເຮັດໃຫ້ປະຊາຊົນລາວ ແລະຊາວ

ວຽດນາມທີ່ຢູ່ໃນນະຄອນວຽງຈັນບໍ່ພໍໃຈຫລາຍ ຕ່າງກໍສແດງທ່າທີ່ຂັດຂວາງຝຣັ່ງເສດທັນທີ ແລະໃນຂນະດຽວກັນນີ້ ກໍມີນາຍທະຫານຝຣັ່ງເສດຄົນນຶ່ງ ມີຍົດຊັ້ນເປັນນາຍພັນຕຣີ ຊື່ ກອມມັງດັງ ຟ້າຟເປີ ໄດ້ເຂົ້າມາຫາເຈົ້າເພັຊຣາດ ໂດຍມີ ທ້າວມັກຄະລະເປັນນາຍພາສາເຂົ້າມານຳ. ພັນຕຣີ ຟ້າຟເປີ ເປັນນາຍທະຫານຝຣັ່ງເສດ ແຕກພ່າຍີ່ປຸ່ນໄປຫລົບລີ້ຢູ່ແຖວພູເຂົາຄວາຍ ເມື່ອໄດ້ຊາບວ່າຍີ່ປຸ່ນຍອມແລ້ວ ກໍພາທະຫານອອກຈາກປ່າ ແລະຈະເຂົ້າມາຢູ່ໃນເມືອງຕາມເດີມ ເມື່ອເຂົ້າມາໃນເມືອງໄດ້ເຫັນລາວຈັດຕັ້ງກອງທະຫານຂຶ້ນເປັນຂະບວນ ມີທ່າທີແຂງຂັນ ບໍ່ກົ້ມຫົວໃຫ້ຝຣັ່ງເສດຄືແຕ່ເກົ່າ ເຂົາຈຶ່ງເຂົ້າມາຫາເຈົ້າເພັຊຣາດ ໃນເວລາເຂົ້າມາຫາເຈົ້າເພັຊຣາດໃນໂຮງປະທັບຂອງພຣະອົງ ມ. ຟ້າຟເປີ ໄດ້ຖືປືນຢ່າງຈັ່ເຂົ້າມາ ແບບທ່າກຽມຍິງພ້ອມ ແລະມີທ້າວມັກຄະລະ ສຸວັນນະວົງ (ອະທິບໍດີກົມພິທີການທູດໃນກະຊວງຕ່າງປະເທດທຸກວັນນີ້) ຍ່າງຄຽງຂ້າງມານຳ ສ່ວນເຈົ້າເພັຊຣາດກໍຖືປືນຍືນຈັ້ ຢູ່ໜ້າມຸກຊັ້ນລຸ່ມໂຮງຂອງພຣະອົງ ໂດຍມີຂ້າພະເຈົ້າຍືນຄຽງຂ້າງຢູ່ນຳຄືກັນ ມ. ຟ້າຟເປີ ໄດ້ທູນເຈົ້າເພັຊຣາດວ່າ "ເຮົາໄດ້ທົນທຸກທໍຣະມານຢູ່ໃນປ່າມາເຖິງນານແລ້ວ ບາດນີ້ສົງຄາມກໍສງົບລົງແລ້ວ ຈຶ່ງຂໍເຂົ້າມາຢູ່ບ້ານຢູ່ເມືອງຕາມເດີມ" ເຈົ້າພັຊຣາດຕອບວ່າ "ເຂົ້າມາກໍໄດ້ ແຕ່ບໍ່ໃຫ້ເອົາກອງທະຫານເຂົ້າມານຳ" ແລ້ວ ມ. ຟ້າຟເປີ ກໍໄດ້ເຂົ້າພັກເຊົາຢູ່ເຮືອນຫລັງທີ່ຢູ່ຕໍ່ໜ້າຄ້າຍທະຫານດຳ ຂອງນາຍພົນສິງ (ຄືເຮືອນຫລັງທີ່ຢູ່ຕໍ່ໜ້າມະຫາວິທຍາລັຍການແພທສີສະວ່າງວົງດຽວນີ້) ໃນທັນທີທີ່ເຂົ້າພັກເຊົາຢູ່ໃນ

ເຮືອນນັ້ນ ມ. ຟ້າຟເບີກໍ່ຊັກທຸງຝຣັ່ງເສດຂຶ້ນ ສະແດງວ່າຝຣັ່ງເສດກັບຄືນມາມີອຳນາດອີກແລ້ວ ໃນກໍຣະນີນີ້ເອງ ພາໃຫ້ປະຊາຊົນຊາວວຽງຈັນແລະ ຊາວວຽດນາມມີຄວາມຄຽດແຄ້ນຫລາຍ ຈຶ່ງໄດ້ພາກັນເດີນຂະບວນຂັດຄ້ານຈົນ ພ.ຕ. ຟ້າຟເບີຢູ່ບໍ່ໄດ້ ຕ້ອງເປີດຄືນເຂົ້າບ່າອີກ ແລະໃນຂນະດຽວກັນນີ້ພວກປະຊາຊົນລາວ – ວຽດນາມ ກໍພາກັນສະແດງຄວາມຂົມຄຽດໃຫ້ຝຣັ່ງເສດ ພວກພົລເຮືອນຈຳນວນ 60 ຄົນທີ່ຢູ່ປຸ່ມຂັງໄວ້ທີ່ກະຊວງໂຍທານັ້ນອີກ ໂດຍພາກັນຮ້ອງດ່າຖຸ້ມໄມ້ຄ້ອນກ້ອນດິນໃສ່ ໃນເວລາພວກເຂົາອອກມາຫາຊື້ອາຫານກິນຈົນພວກເຂົາອອກມາບໍ່ໄດ້ດັ່ງນັ້ນ ມ. ບຸຣາໄຊ ອະດີດຂ້າຫລວງຝຣັ່ງເສດປະຈຳລາວຈຶ່ງຮ້ອງຂໍຕໍ່ເຈົ້າເພັດຊະຣາດ ຂໍໃຫ້ຕິດຕໍ່ໄປຍັງນາຍທະຫານອັງກິດ ກັບຕົນອື່ນ ນາຍທະຫານອັງກິດຫົວໜ້າເສຣີໄທຍເມືອງໜອງຄາຍຈຶ່ງໄດ້ຈັດເອົາກຳປັ່ນ 2 ເຫລັ້ມ ພ້ອມໂດຍທະຫານເສຣີໄທຍ ຈຳນວນ 62 ຄົນມາຮັບເອົາຊາວຝຣັ່ງເສດຈາກວຽງຈັນໄປໜອງຄາຍໂດຍທາງເຮືອ.

ຂ້າພຽງເຈົ້າໄດ້ເຫັນການອົພຍົບຂົນຂອງລົງເຮືອ ຂອງຊາວຝຣັ່ງເສດໃນປາງນັ້ນ ກໍຮູ້ສຶກສັງເວດສລົດໃຈບັງອະນິດຈັງ ເພາະແຕ່ກ່ອນຝຣັ່ງເສດເບັ່ນນາຍລາວ ແລະຊາວວຽດນາມບໍ່ເຄີຍທາບເຄີຍຄອມ ມີແຕ່ຕີນຊີ້ມືຊີ້ເອົາ ມາໃນເທື່ອນີ້ໄດ້ເຫັນພວກເຂົາແບກຂົນສິ່ງຂອງເອົາເອງ ຈົນເຫື່ອຍ້ອຍເຫື່ອຍັ້ງ ອຸ້ມລູກຈູງຫລານສຽງຮ້ອງໄຫ້ຊ່ວາແຊວໃນເວລາລົງເຮືອຢູ່ທ່າໄຮງເຈົ້າເພັດຊະຣາຊນັ້ນເອງ.

ເມື່ອໄດ້ຈັດສົ່ງຝຣັ່ງເສດອອກພົ້ນຈາກວຽງຈັນໝົດແລ້ວ ຄນະ

ລາວອິສຣະ ຫລືຄນະຜູ່ກໍ່ການທີ່ດຳເນີນການໃນການທີ່ຈະຈັດຕັ້ງຣັຖບານ ແລະປະກາດເອກຣາດຕໍ່ໄປ ບຸກຄົນຜູ່ສຳຄັນຊັ້ນແນວໜ້າໃນການດຳເນີນງານດັ່ງນີ້ມີ ທ່ານພຍາຄຳມ້າວ ທ້າວກະຕ່າຍ ສເດັດເຈົ້າສຸວັນນະພູມາ ທ້າວຫຍຸຍ ທ້າວທັນ (ນາຍພັນທັນ) ທ້າວບົງ (ພ.ອ. ບົງ ສຣີສັຕມະກຸນ) ມະຫາສີລາ ວີຣະວົງສ໌ ທ້າວອຳພອນພົລຣາຊ ມະຫາປະສານ ທອງພັກດີ ທ້າວຄຳໃບ ພິລາພັນເດຊ ທ້າວເກື້ອງ ປະທຸມຊາຊາດ ທ້າວບົວຈັນ ອິນທະວົງ ນາຍພັນສີງ ຍາໝ່ ພົມມະສອນ ຍາໝ່ ບຸນລ້ຽງ ຍາໝ່ ເມືອງໂຊງ ທ້າວສົມສີ ເຈົ້າສົມສນິດ ພຍາອຸ່ນເຮືອນ ນຣສິງ ພຍາຄູນ ພິລາວັນ ເປັນຕົ້ນ.

ຄນະດັ່ງກ່າວໄດ້ເຂົ້າປະຊຸມປຶກສາລືກັນ ວາງແນວທາງທັ້ງຫາ~~ການຈະປະກາດເອກຣາດ~~ການຈະປະກາດເອກຣາດນີ້ ຕ້ອງມີກົດໝາຍຣັຖທັມມະນູນຂອງຊາດເປັນຫລັກໃນການປົກຄອງປະເທດດັ່ງນັ້ນ ຄນະຜູ່ກໍ່ການຈຶ່ງໄດ້ຕັ້ງຄນະກັມມະການຂຶ້ນຄນະນຶ່ງ ສຳຫລັບເຮັດຮ່າງຣັຖທັມມະນູນຊົ່ວຄາວຂຶ້ນເມື່ອຮຽບຮ້ອຍແລ້ວ ຄນະຜູ່ກໍ່ການ ຈຶ່ງພາກັນໄປເຝົ້າເຈົ້າເພັຊຣາຊ ສເນີແຜນການແລະຂໍ້ຕົກລົງຂອງຄນະ ໂດຍຂໍໃຫ້ພຣະອົງປະກາດຍຸບຣັຖບານເກົ່າຂອງພຣະອົງທີ່ເປັນຣັຖບານ ຈຳເພາະອານາຈັກຫລວງພຣະບາງນັ້ນເສັຽ ແລ້ວຈັດຕັ້ງຣັຖບານໃໝ່ຂຶ້ນ ໃຫ້ເປັນຣັຖບານຂອງລາວແທ້ ເປັນຣັຖບານຂອງລາວທົ່ວປະເທດ ເປັນຣັຖບານທີ່ມີອິສຣະ ບໍ່ຢູ່ໃຕ້ອຳນາດການຄວບຄຸມເບິ່ງແຍງ ຫລືໃຕ້ຄວາມອາຮັກຂາຂອງຊາດໃດໆ ທັງໝົດ.

ໃນການນີ້ ເຈົ້າເພັຊຣາຊໄດ້ຕອບວ່າ ພຣະອົງເຫັນດີເຫັນຊອບນຳ ແຕ່ຕ້ອງເຮັດເປັນຂັ້ນໆໄປ ຄື ໃນຂັ້ນຕົ້ນນີ້ ຕ້ອງປະກາດໂຮມດິນແດນທີ່ຝຣັ່ງເສດແບ່ງໄວ້.ເປັນສອງເຂດ ການປົກຄອງນັ້ນເຂົ້າເປັນອັນນຶ່ງອັນດຽວກັນກ່ອນ ແລະຈະຕ້ອງຂາບທູນໃຫ້ ພຣະເຈົ້າສຣີສວ່າງວົງ ຊົງຮັບຮູ້ແລະຮັບຊາບດ້ວຍ ປະການນຶ່ງຈະຕ້ອງຖາມຄວາມເຫັນແລະຄວາມຮູ້ສຶກຂອງບັນດາເຈົ້າແຂວງທາງພາກໃຕ້ 4 ແຂວງຄືແຂວງສວັນນະເຂດ ແຂວງສາລະວັນ ແຂວງອັດຕະປື ແລະແຂວງຈຳປາສັກນຳອີກເສັຽກ່ອນວ່າຈະພໍໃຈບໍ່? ແລະເມື່ອຈະໄດ້ຮັບຄຳຕອບຈາກແຂວງທັງສີ່ ແຂວງນັ້ນ ກໍຕ້ອງຄອຍຖ້າໃຫ້ເຖິງວັນທີ 15 ກັນຍາກ່ອນ ເມື່ອໄດ້ຮັບຄຳຊີ້ແຈງຂອງເຈົ້າເພັຊຣາຊດັ່ງນີ້ ຄນະຜູ້ກໍ່ການກໍພາກັນກັບຄືນ ມາກຽມການຕໍ່ໄປ.

## ຂ່າວອະວະມຸງຄຸນ

ໃນຄນະທີ່ພວກຜູ້ກໍ່ການຈັດຕັ້ງຣັຖບານລາວອິສຣະ ພວມທາງທາວຽກການໃນການຈັດຕັ້ງຣັຖບານຢູ່ນີ້ ກໍໄດ້ມີຂ່າວອັນບໍ່ເປັນມຸງຄຸນຊອດອອກມາວ່າ "ພຣະເຈົ້າສຣີສວ່າງວົງສ໌ແຫ່ງນະຄອນຫລວງພຣະບາງໄດ້ຍິນຍອມ ໃຫ້ຝຣັ່ງເສດເຂົ້າມາປົກຄອງລາວຕາມເດີມແລ້ວ" ດັ່ງນີ້ສຽງຊັບໆແຊບໆນີ້ ໄດ້ແຜ່ຂຍາຍໄປທົ່ວເມືອງ ຈົນເປັນເຫດໃຫ້ປະຊາຊົນລະເມືອງທັງຫລາຍມີຄວາມເສັຽໃຈເປັນທີ່ສຸດ ແຕ່ກໍຖືວ່າເປັນພຽງແຕ່ຂ່າວຍັງ ບໍ່ເປັນຄວາມຄັກແນ່ແທ້ ຈຶ່ງພາກັນອົດໃຈລໍຟັງເຫດການ

ຕໍ່ໄປ ແຕ່ຄວາມຈິ່ງແລ້ວຂ່າວເປົ່າປີອອກມານັ້ນເປັນຄວາມຈິງ ເປັນຂ່າວທີ່ແນ່ນອນທີ່ສຸດ ເພາະມີໂທຣະເລກ ເປັນທາງຣາຊການມາຈາກຫລວງພຣະບາງ ເຖິງເຈົ້າເພັຊຣາຊ ບອກວ່າ ພຣະເຈົ້າສຣີສວ່າງວົງສ໌ທົງຮຽກຮ້ອງໃຫ້ຝຣັ່ງເສດເຂົ້າມາປົກຄອງລາວຕາມເດີມ ໂທຣະເລກທີ່ກ່າວນັ້ນມີມາໃນວັນທີ 7 ກັນຍາ (ເສດຕາມ) 1945 ດັ່ງມີສຳເນົາຕໍ່ໄປນີ້ :

## (ສຳເນົາໂທຣະເລກ)

### ໂທຣະເລກຣາຊການ

"ຫລວງພຣະບາງ 7 ເສັດຕາມ 1945 ຣັຖມົນຕຣີກະຊວງມະຫາດໄທ ເຖິງເຈົ້າມະຫາອຸປຣາຊວຽງຈັນມະຫາດໄທ ໂທຣະເລກ 233.

ຂໍຣຽນໃຫ້ຊາບວ່າ ສົມເດັດພຣະເຈົ້າຢູ່ຫົວ ຍັງທົງຮຽກຮ້ອງຂໍໃຫ້ຣາຊອານາຈັກຫລວງພຣະບາງເປັນອານານິຄົມຂອງຝຣັ່ງເສດຕໍ່ໄປ"

ໂທຣະເລກສະບັບນີ້ ເຈົ້າມະຫາອຸປຣາດເພັຊໄດ້ອຳເຊື່ອງໄວ້ ບໍ່ເຄີຍໃຫ້ຜູ້ໃດຮູ້ເລີຍເພາະຢ້ານປະຊາຊົນພົລເມືອງລຸກຮືຂຶ້ນທຳຮ້າຍ ພຣະເຈົ້າສຣີສວ່າງວົງສ໌ເສັຽ ພຣະອົງຄອຍຖ້າໃຫ້ເຖິງວັນທີ 15 ກັນຍາກ່ອນ ເມື່ອໄດ້ປະກາດໂຮມແຜ່ນດິນລາວ ທາງພາກໃຕ້ເຂົ້າເປັນອັນນຶ່ງອັນດຽວກັນແລ້ວ ຈຶ່ງຈະເປີດເຜີຍໂທຣະເລກນັ້ນໃຫ້ປະຊາຊົນຊາບ.

ສະນັ້ນ ເມື່ອພາຍຫລັງວັນທີ 15 ກັນຍາແລ້ວ ພຣະອົງຈຶ່ງໄດ້ອອກຖແລງການ ໂຮມດິນແດນແຂວງພາກໃຕ້ ເປັນອັນນຶ່ງອັນດຽວກັນ.

## *ເຈົ້າເພັຊຣາດ ຖືກປົດອອກຈາກຕໍາແຫນ່ງມະຫາອຸປຣາຊ*

ຕໍ່ມາເມື່ອເຈົ້າມະຫາອຸປະຣາຊເພັຊຣາຊ ໄດ້ອອກປະກາດໂຮມດິນລາວທາງພາກໃຕ້ 4 ແຂວງ ເຂົ້າເປັນອັນນຶ່ງອັນດຽວກັນກັບຣາຊອານາຈັກຫລວງພຣະບາງ ໃນວັນທີ 15 ກັນຍາ ໃນຖານະທີ່ພຣະອົງດຳຣົງຕໍາແໜ່ງເປັນມະຫາອຸປຣາດ ຂອງຣາຊອານາຈັກຫລວງພຣະບາງແລ້ວ ດັ່ງນັ້ນ ພຣະອົງກໍໄດ້ມີໂທຣະເລກໄປທູນພຣະເຈົ້າສຣີສວ່າງວົງສ໌ ຕາມເຫດການທີ່ພຣະອົງໄດ້ກະທຳມາ ແລະໃນຂະນະດຽວກັນ ຝ່າຍຄນະຜູ້ກໍ່ການກໍໄດ້ເຂົ້າປະຊຸມກັນ ໃນວັນທີ 8 ຕຸລາ ເພື່ອວາງແຜນຈັດຕັ້ງຣັຖບານລາວອິສຣະ ປະກາດເອກຣາດ ອິສຣະພາບຂອງລາວອີກ ຄນະທີ່ເຂົ້າປະຊຸມຮ່ວມມີ :

ທ້າວກະຕ່າຍ, ພຍາຄຳມ້າວ, ເຈົ້າສຸວັນນະພູມາ, ທ້າວຫຍຸຍ, ເຈົ້າສົມສນິດ, ພຍາອຸ່ນເຮືອນ, ທ້າວເກື່ອງ, ມຫາສີລາ ວີຣະວົງສ໌, ທ້າວອຸດອນ (ນາຍພັລ ອຸດອນ) ທ້າວທັນ (ນາຍພັນທັນ) ທ້າວບົງ (ເພື່ອລາວ ພ.ອ. ບົງ) ທ້າວຄຳໃບ, ທ້າວບົວຈັນ ອິນທະວົງສ໌, ນາຍພັນຕຣີສິງ (ນາຍພັລສິງ ຣັຕນະສມັຍ) ທ້າວທອງຄຳ (ພັນໂທ ປະສານ ທອງພັກດີ) ທ້າວອັ້ນພອນ ພົລຣາຊ ເປັນຕົ້ນ ຄນະທີ່ເຂົ້າປະຊຸມນີ້ຮຽກວ່າ ຄນະກັມມະການຣາສດອນ ໃນການປະຊຸມເທື່ອນີ້ໄດ້ຕົກລົງກັນວ່າ :

1. ກຳນົດເອົາວັນທີ 12 ຕຸລາ ເປັນວັນປະກາດເອກຣາດ ປະກາດອິສຣະພາບ.

2. ຄັດເລືອກບຸກຄົນຜູ້ຈະດຳຣົງຕຳແໜ່ງ ເປັນນາຍົກຣັຖມົນ-ຕຣີ ແລະຣັຖມົນຕຣີປະຈຳກະຊວງຕ່າງ ໆ ດັ່ງນີ້:

1– ພຍາຄຳມ້າວ ເປັນນາຍົກຣັຖມົນຕຣີ

2– ທ້າວກະຕ່າຍ ເປັນຣັຖມົນຕຣີກະຊວງຄັງ

3– ເຈົ້າສຸວັນນູມາ „ ໂຍທາທິການ

4– ທ້າວຫຍຸຍ „ ສຶກສາທິການ

5– ເຈົ້າສົມສນິດ „ ຍຸຕິທັມ ແລະມະຫາດໄທ

6– ເຈົ້າສຸພານຸວົງ „ ຄມະນາຄົມ (ເວລານັ້ນຍັງຢູ່ວຽດນາມ)

7– ພັນຕຣີສິງ ຣັຕນະສມັຍ „ ກະລາໂຫມ

8– ທ້າວອຸ່ນ „ ກະເສດ

9– ພຍາອຸ່ນເຮືອນ „ ຊ່ອຍມະຫາດໄທ

10– ທ້າວທັນ (ນາຍພົລທັນ) „ ຕ່າງປະເທດ

11– ທ້າວເກື້ອງ „ ຊ່ອຍກະເສດ

ສຳຫລັບຕົວນາຍົກຣັຖມົນຕຣີ ທີ່ປະຊຸມໄດ້ກະໄວ້ວ່າ ຈະຂໍໃຫ້ເຈົ້າເພັຊຣາດເປັນ.

3. ໃຫ້ໂທຣະເລກທູນພຣະເຈົ້າສຣີສວ່າງວົງສ໌ ພຣະເຈົ້າແຜ່ນດິນຫລວງພຣະບາງຊາບ ແລະທູນເຊີນໃຫ້ພຣະອົງທົງເປັນພຣະກະສັດລາວທັງໝົດ ພາຍໃຕ້ຣັຖທັມະນູນທີ່ຈະໄດ້ປະກາດໃຊ້ ໃນເວລາປະກາດເອກຣາດແລ້ວສືບຕໍ່ໄປ.

ເມື່ອໄດ້ປະຊຸມຕົກລົງກັນນີ້ແລ້ວ ປະທານກອງປະຊຸມກໍໄດ້ມີໂທຣະເລກຂາບທູນພຣະເຈົ້າສຣີສວ່າງວົງສ໌ ມີໃຈຄວາມສຳຄັນດັ່ງນີ້ ;

1. ກັມການຣາສດອນ ຂໍທູນໃຫ້ພຣະອົງຊາບໃນຈຸດປະສົງຂອງການປ່ຽນແປງການປົກຄອງ ທີ່ຄນະກັມະການຣາສດອນຈະໄດ້ປະກາດ.

2. ຂໍໃຫ້ພຣະອົງຮັບເອົາກົດໝາຍຣັຖທັມມູນໃໝ່ ຂອງປະເທດທີ່ຄນະກັມະການຣາສດອນຈະໄດ້ນຳທູນຖວາຍ.

3. ຂໍໃຫ້ພຣະອົງປະກາດລຶບລ້າງຣັຖບານແຫ່ງອານາຈັກຫລວງພຣະບາງແລ້ວ ທັງຮັບຮອງເອົາຣັຖບານໃໝ່ແຫ່ງຣາຊອານາຈັກລາວທັງໝົດ ທີ່ຈະໄດ້ປະກາດຈັດຕັ້ງຂຶ້ນຕາມກົດໝາຍຣັຖທັມມູນໃໝ່.

4. ຂໍເຊີນພຣະອົງດຳຣົງຕຳແໜ່ງເປັນພຣະກະສັດລາວໝົດທັງປະເທດ ພາຍໃຕ້ກົດໝາຍຣັຖທັມມູນສືບຕໍ່ໄປ.

ໂທຣະເລກສະບັບນີ້ ໄດ້ມີໄປທູນພຣະເຈົ້າສຣີສວ່າງວົງສ໌ ທີ່ນະຄອນຫລວງພຣະບາງ ເມື່ອວັນທີ 9 ຕຸລາ ໂດຍກຳນົດໃຫ້ພຣະອົງຕອບພາຍໃນ 48 ຊົ່ວໂມງ.

ຮຸ່ງຂຶ້ນວັນທີ 10 ຕຸລາ ຄນະກັມະການຣາສດອນກໍມາກັນເຂົ້າໄປເຝົ້າເຈົ້າມະຫາອຸປຣາຊເພັຊຣາຊ ທູນຊີ້ແຈງເຫດການແລະຄວາມມຸ່ງມາດປາຖນາ ໃນການທີ່ຈະຈັດຕັ້ງຣັຖບານລາວຂຶ້ນໃນວັນທີ 12 ຕຸລາ ໃຫ້ພຣະອົງຊາບ ພ້ອມກັນນີ້ ກໍໄດ້ທູນໃຫ້ພຣະອົງຮັບຕຳແໜ່ງເປັນນາຍົກຣັຖມົນຕຣີຂອງຣັຖບານນີ້ດ້ວຍ.

ຫ້າມຈຳໜ່າຍ

ເຈົ້າມຫາອຸປຣາຊເພັຊຣາຊ ໄດ້ທັງປະຕິເສດບໍ່ຮັບເປັນນາຍົກຣັຖມົນຕຣີ ໂດຍອ້າງວ່າ ເວລານີ້ພຣະອົງຍັງດຳຣົງຕຳແໜ່ງເປັນນາຍົກຣັຖມົນຕຣີ ແຫ່ງຣັຖບານເກົ່າຂອງພຣະເຈົ້າສຣີສວ່າງວົງສ໌ຢູ່. ພຣະເຈົ້າຢູ່ຫົວຍັງບໍ່ທັນມີພຣະຣາຊອາຍາປະກາດລຶບລ້າງຣັຖບານເກົ່ານັ້ນ ຈຶ່ງຮັບບໍ່ໄດ້ ຖ້າຮັບເປັນກໍຈະເປັນການກະບົດຕໍ່ພຣະເຈົ້າສຣີສວ່າງວົງສ໌ ແຕ່ວ່າ ການທີ່ກັມະການຣາສດອນ ແລະປະຊາຊົນທັງຫລາຍຈະເຮັດໄປນີ້ ພຣະອົງກໍບໍ່ຄັດຄ້ານແລະຂັດຂວາງຢ່າງໃດເລີຍ.

ເມື່ອໄດ້ຮັບຄຳຕອບຈາກເຈົ້າມຫາອຸປຣາຊເພັຊຣາຊດັ່ງນີ້ ຄນະກັມະການຣາສດອນ ກໍພາກັນກັບຄືນມາດ້ວຍຄວາມອ່ອນອົກອ່ອນໃຈ ແຕ່ເມື່ອໄດ້ເຕົ້າໂຮມປະຊຸມກັນໃນວັນທີ 10 ນັ້ນອີກ ກໍໄດ້ເກີດຄວາມມານະຫ້າວຫານໃນການຈັດຕັ້ງຣັຖບານຂຶ້ນໃໝ່ ເນື່ອງຈາກໄດ້ຟັງຄຳເວົ້າຂອງທ້າວກະຕ່າຍ ທີ່ໄດ້ປະກາດກ້ອງຂຶ້ນໃນກາງປະຊຸມວ່າ "ຖ້າບໍ່ມີໃຜຮັບເປັນນາຍົກຣັຖມົນຕຣີແລ້ວ ຂ້າພະເຈົ້າຂໍຮັບເປັນເອງ" ເມື່ອທີ່ປະຊຸມໄດ້ຟັງດັ່ງນີ້ ຈຶ່ງໄດ້ປະຊຸມພິຈາຣະນາເລືອກຕົວບຸກຄົນ ຜູ້ສົມຄວນຈະຮັບຕຳແໜ່ງເປັນນາຍົກຣັຖມົນຕຣີ ແລະຣັຖມົນຕຣີຕ່າງ ໆ ອັນໃໝ່. ບັນດາບຸກຄົນຜູ້ສົມຄວນແກ່ຕຳແໜ່ງນາຍົກໃນເວລານັ້ນ ນອກຈາກເຈົ້າເພັຊຣາຊແລ້ວ ທີ່ປະຊຸມເຫັນສົມຄວນສອງທ່ານຄື ພຍາຄຳມ້າວແລະທ້າວກະຕ່າຍ ແຕ່ທີ່ປະຊຸມສເນີພຍາຄຳມ້າວກ່ອນ ເພາະມີອາວຸໂສກວ່າ ພຍາຄຳມ້າວກໍຍິນດີຮັບເປັນນາຍົກຣັຖມົນຕຣີ ດັ່ງນັ້ນ ຈຶ່ງມີການສັບ-ຜ່ຽນກັນໃໝ່ດັ່ງນີ້:

1- ພຍາຄຳມ້າວ ເປັນນາຍົກຣັຖມົນຕຣີ

2- ທ້າວກະຕ່າຍ ເປັນຣັຖມົນຕຣີກະຊວງການຄັງ

3- ທ້າວຫຍຸຍ ,, ກະຊວງສຶກສາທິການ

4- ເຈົ້າສຸວັນພູມາ ,, ກາຊວງໂຍທາທິການ

5- ທ້າວທັນ ,, ກະຊວງຕ່າງປະເທດ

6- ເຈົ້າສົມສນິດ ,, ມະຫາດໄທແລະຍຸຕິທັມ

7- ພັນຕຣີສິງ ,, ປ້ອງກັນປະເທດ

8- ເຈົ້າສຸພານຸວົງ ,, ຄະມະນາຄົມ

9- ທ້າວອຸ່ນ ,, ກະຊວງກະເສດ (ເວລານັ້ນ ຍັງຢູ່ສວັນເຂດ)

10- ເພັຽອຸ່ນເຮືອນ ,, ຊ່ອຍກະຊວງມະຫາດໄທ

11- ທ້າວເກື່ອງ ,, ຊ່ອຍກະຊວງກະເສດ

ເມື່ອໄດ້ປະຊຸມຕົກລົງກັນດັ່ງນີ້ແລ້ວ ກໍໄດ້ກຽມການທີ່ຈະປະກາດເອກຣາຊ ປະກາດອິສຣະພາບ ໃນຕອນເຊົ້າຂອງວັນທີ 12 ຕຸລາ 1945 ຕາມທີ່ໄດ້ກຳນົດໄວ້ແຕ່ເດີມຢ່າງບໍ່ທໍ້ຖອຍບໍ່ຽນແປງເລີຍ ແລະ ກໍຄອງຄອຍຖ້າຄຳຕອບ ຈາກພຣະຣາຊວັງຫລວງພຣະບາງຢູ່ຢ່າງຮ້ອນໃຈ ຕໍ່ມາເຖິງເວລາ 09.30 ມ. ຂອງວັນທີ 10 ຕຸລານັ້ນເອງ ກໍມີໂທຣະເລກມາຈາກຫລວງພຣະບາງ ເປັນໂທຣະເລກຂອງຣັຖມົນຕຣີກະຊວງມະຫາດໄທຍ ໄດ້ຮັບສັ່ງຈາກພຣະເຈົ້າແຜ່ນດິນສຣີສວ່າງວົງສ໌ ເຖິງທ້າວ

ອູ່ທອງ ສຸວັນນະວົງສ໌ ຣັຖມົນຕຣີກະຊວງຄັງ ທີ່ມາຣາຊການຢູ່ວຽງຈັນ ມີສຳເນົາດັ່ງນີ້ :

(ສຳເນົາໂທຣະເລກ ຖອດສເດັດເຈົ້າມຫາອຸປະຣາຊ)

ຫລວງພຣະບາງ ທີ 10 ຕຸລາ 1945

ຣັຖມົນຕຣີກະຊວງມະຫາດໄທຍ ເຖິງພນະທ່ານອູ່ທອງ ຣ.ມ.ຕ. ຄັງ ທີ່ມາຣາຊການທີ່ວຽງຈັນທນ໌

ມະຫາດໄທຍ ເລກທີ 285

ດ້ວຍມີພຣະຣາຊໂອງການ ໃຫ້ຍົບປຸງຕຳແໜ່ງນາຍົກຣັຖມົນຕຣີ ເພື່ອເໝາະສົມກັບການເມືອງແລະການປົກຄອງ ເຊິ່ງຂັດແຍ່ງກັບມະຕິມະຫາຊົນ ເຣື່ອງນີ້ພຣະອົງບໍ່ໄດ້ປຶກສາກັບເຈົ້າຕົວ (ເພັຊຣາຊ) ມາກ່ອນ ແລະໄດ້ສັ່ງໃຫ້ປົດຕຳແໜ່ງສັກດິນາຂອງມຫາອຸປຣາຊແລ້ວ ຈຶ່ງຮຽກທ່ານຂຶ້ນໄປຫລວງພຣະບາງ ເພື່ອຮັກສາໜ້າທີ່ແລະຕຳແໜ່ງຕາມປົກກະຕິ.

ໂທຣະເລກອີກສະບັບນຶ່ງ ມີມາເຖິງພນະທ່ານຜຸຍ ບໍ່ນຍາ ຣ.ມ.ຕ. ກະຊວງທັມການ ທີ່ມາຣາຊການທີ່ວຽງຈັນ ມີຂໍ້ຄວາມດັ່ງນີ້ :

ຫລວງພຣະບາງ ທີ 10 ຕຸລາ 1945

ຣັຖມົນຕຣີມະຫາດໄທ ຮຽນພນະທ່ານຜຸຍ ຣັຖມົນຕຣີກະຊວງທັມະການ ມາຣາຊການທີ່ວຽງຈັນ.

ມະຫາດໄທຍ ເລກທີ 283

ດ້ວຍມີພຣະຣາຊໂອງການ ໃຫ້ປັບປຸງ ແຂ່ງຂາຍກຣັຖມົນ-ຕຣີ ເພື່ອໃຫ້ເໝາະສົມກັບການເມືອງແລະການປົກຄອງ ເຊິ່ງຂັດແຍ່ງກັບມະຕິມະຫາຊົນ ເຣື່ອງນີ້ພຣະອົງບໍ່ໄດ້ປຶກສາກັບເຈົ້າຕົວ (ເພັຊຣາຊ) ມາກ່ອນ ແລະໄດ້ສັ່ງປົດຕຳແໜ່ງສັກດີນາຂອງມຫາອຸປຣາຊແລ້ວ ຈຶ່ງຮຽກທ່ານຂຶ້ນໄປທີ່ຫລວງພຣະບາງ ເພື່ອຮັກສາໜ້າທີ່ຕຳແໜ່ງຕາມປົກະຕິ ຂໍໃຫ້ເປີດເຜີຍພຣະຣາຊໂອງການນີ້ໃຫ້ປະຊາຊົນຊາບ ແລະໃຫ້ທ່ານຕົກລົງກັບພນະທ່ານຄູ່ຫອງ ເພື່ອຈັດພິທີປ້ອງກັນຊີວິດແລະຊັພສິນຂອງປະ-ຊາຣາສດອນ ໃຫ້ຊີ້ແຈ້ງເຣື່ອງທັງໝົດນີ້ໃຫ້ພຍາຄຳມ້າວຊາບ ເພື່ອຖືປະຕິບັດການຄຳສັ່ງນີ້ຕໍ່ໄປ".

ພໍເຖິງຣຸ່ງເຊົ້າຂອງວັນທີ 10 ຕຸລາ 1945 ເຈົ້າມຫາອຸປຣາຊ ເພັຊຣາຊ ກໍ່ມີຍາສັ່ງໃຫ້ບັນດາຂ້າຣາຊການ ເຖົ້າແກ່ ປະຊາຊົນໃນນະ–ຄອນວຽງຈັນ ເຂົ້າໄປເຝົ້າໃນຕຳໜັກຂອງພຣະອົງ ແລ້ວພຣະອົງກໍເອົາໂທຣະເລກສັ່ງຖອດພຣະອົງ ອອກຈາກຕຳແໜ່ງສັກດີນາມຫາອຸປຣາຊມາເປີດເຜີຍໃຫ້ປະຊາຊົນຊາບທົ່ວກັນ ພ້ອມກັບໂທຣະເລກລັບຂອງພຣະເຈົ້າສຣີສວ່າງວົງສ໌ ທີ່ໄດ້ມີມາແຕ່ວັນທີ 7 ກັນຍາ ກ່ຽວກັບການທີ່ພຣະອົງໄດ້ຮຽກຮ້ອງໃຫ້ຝຣັ່ງເສດກັບຄືນມາປົກຄອງຕາມເດີມ ດັ່ງໄດ້ກ່າວມາແລ້ວແຕ່ກ່ອນ ມາເປີດເຜີຍໃຫ້ປະຊາຊົນຊາບທົ່ວເຖິງກັນ ແລ້ວພຣະອົງກໍປະກາດຕໍ່ໜ້າປະຊາຊົນທັງຫລາຍວ່າ ຕັ້ງແຕ່ນີ້ຕໍ່ໄປພຣະອົງໄດ້ວາງມືຈາກວຽກບ້ານການເມືອງທັງໝົດ ຈະຂໍດຳເນີນຊີວິດໄປຢ່າງປະຊາຊົນຄົນລາວສາມັນຜູ້ນຶ່ງເທົ່ານັ້ນ.

ເມື່ອຄນະຜູ້ກໍ່ການ ຫລືຄນະກັມມະການຣາສດອນ ພ້ອມດ້ວຍຂ້າຣາຊການ ປະຊາຊົນພົລະເມືອງຊາວນະຄອນວຽງຈັນ ໄດ້ຊາບເຫດການແລະຂ່າວເປົ່າປົ່ວທີ່ໄດ້ຍິນມາແຕ່ກ່ອນນັ້ນ ເປັນຄວາມຈິງດັ່ງນີ້ແລ້ວ ຕ່າງກໍພາກັນເກີດຄວາມຄຽດແຄ້ນເຈັບແສບຫົວໃຈເປັນອັນມາກ ໃນການທີ່ຜູ້ເປັນປະມຸກຂອງຊາດດຳເນີນນະໂຍບາຍການເມືອງໄປຕາມມະຕິຂອງຕົນເອງ ໂດຍບໍ່ຟັງສຽງຂອງປະຊາຊົນພົລະເມືອງ ແລະສະຖານະການຂອງໂລກແຕ່ຢ່າງໃດ ຊ້ຳບໍ່ພໍຍັງມາໃສ່ໂທດຖອດເຈົ້າເພັຊຣາຊຜູ້ຊຶ່ງເປັນບຸກຄົນສຳຄັນຂອງຊາດ ມີຄົນຮູ້ຈັກ ເຄົາຣົບນັບຖື ທົ່ວປະເທດ ອອກຈາກຕຳແໜ່ງສັກດີນານຳອີກ ແລະອັນນີ້ ກໍຍິ່ງທະວີຄວາມຄຽດແຄ້ນຂອງປະຊາຊົນຂຶ້ນອີກຫລາຍຕໍ່ ດັ່ງນັ້ນ ຄນະຜູ້ກໍ່ການ ຈຶ່ງໄດ້ເຂົ້າປະຊຸມກັນອີກເປັນການດ່ວນ ພາຍຫລັງຈາກເວລາກັບມາຈາກຕຳໜັກຂອງເຈົ້າເພັຊຣາຊແລ້ວ. ການປະຊຸມເທື່ອນີ້ ກໍແມ່ນຈັດການ ກຽມການປະກາດເອກຣາດ ປະກາດອິສຣະພາບ ໃນວັນທີ 12 ຕຸລາ ເວລາ 7.30 ມ, ໃຫ້ໄດ້ຕາມກຳນົດນັ້ນເອງ ໂດຍການແບ່ງໜ້າທີ່ກັນດັ່ງນີ້ :

1. ຝ່າຍທະຫານ ແລະຕຳຣວດ ໃຫ້ຈັດການຮັກສາຄວາມສະງົບທັງພາຍໃນ ແລະພາຍນອກຂອງນະຄອນວຽງຈັນ.

2. ຝ່າຍພົລະເຮືອນ ໃຫ້ຈັດການປະກາດເຊີນຊວນຂ້າຣາຊການ ພໍ່ຄ້າ ປະຊາຊົນ ເຂົ້າມາຊຸມນຸມຟັງຄຳປະກາດເອກຣາດ ໃນຕອນເຊົ້າຂອງວັນທີ 12 ຕຸລາ ເວລາ 7.30 ມ.

3. ຕິດຕໍ່ກັບຜູ້ບັນຊາການທະຫານຈີນ ທີ່ປະຈຳຢູ່ໃນວຽງຈັນ

ໃຫ້ຮັບຮູ້ການປະກາດເອກຣາດ ແລະຂໍຄວາມຮ່ວມມື ຊ່ອຍປ້ອງກັນເຫດຮ້າຍອາດຈະເກີດຈາກສັດຕຣູທາງພາຍນອກດ້ວຍ ເຊິ່ງເຣື່ອງນີ້ ຜູ້ບັນຊາການທະຫານຈີນ ກໍໄດ້ຮັບຮອງເປັນຢ່າງ.

## ວັນທີ 12 ຕຸລາ

ວັນທີ 12 ຕຸລາ ຄ.ສ. 1945 ກົງກັບ ພ.ສ. 2488 ນັບວ່າເປັນວັນສຳຄັນຍິ່ງໃນປະວັດສາດຂອງຊາດລາວຍຸກປະຣະມານູ ຫລືສມັຍສັຕວັດທີ 20 ແຫ່ງກຣິດສັນຣາຊ ມັນເປັນວັນທີ່ປະຊາຊົນລາວທົ່ວປະເທດ (ເວັ້ນແຕ່ພວກທີ່ມັກດີຕໍ່ຝຣັ່ງເສດ ເພື່ອປະໂຍດຄວາມສຸກສ່ວນຕົວ) ໄດ້ພາກັນຕື່ນຕົວລຸກຂຶ້ນປະກາດຄວາມເປັນເອກຣາດ ຄວາມມີອິສຣະພາບ ແລະເສຣີພາບຂອງຕົນເອງ ພາຍຫລັງທີ່ໄດ້ເສັຽສິ່ງເຫລົ່ານີ້ມາແລ້ວເຫິງນານເຖິງ 166 ປີ ຈົນດິນລາວລາງພວກໄດ້ຖືກຊາດອື່ນກືນເອົາໄປເປັນຊາດຂອງເຂົາ ພາໃຫ້ເສັຽຄວາມເປັນຊາດລາວ ແລະລືມຄວາມເປັນລາວໄປແລ້ວກໍມີເປັນອັນມາກ. ເອກຣາດ ອິສຣະພາບ ແລະເສຣີພາບຂອງລາວທີ່ປະກາດຂຶ້ນໃຫ້ໂລກຊາບໃນວັນທີ 12 ຕຸລາ 1945 ນີ້ ເຖິງແມ່ນຈະບໍ່ຍືນຄົງທົນຢູ່ໄດ້ຕລອດມາກໍຕາມ ແຕ່ກໍເປັນພີຍານຫລັກຖານອັນສຳຄັນຍິ່ງໃນຄວາມຕື່ນຕົວຂອງຄົນລາວ ໃນຄວາມຮູ້ເນື້ອຄິງຂອງຄົນລາວ ແລະຄວາມປາຖນາອັນຍອດຍິ່ງຂອງຄົນລາວ ດັ່ງດຽວກັນກັບຄວາມມຸ່ງມາດປາຖນາຂອງບັນດາຊາດທີ່ມີເອກຣາດ ມີອິສຣະພາບທັງຫລາຍໃນໂລກ ເພາະສະນັ້ນ ວັນທີ 12 ຕຸລາ ຈິ່ງເປັນວັນສຳຄັນທີ່

ແຂວງຍືນຫັນໜ້າມາທາງປະຊາຊົນ ແລ້ວສຽງອຶກທຶກພື້ນມືຂອງປະຊາຊົນທີ່ດັງພົດສນັ່ນຢູ່ ກໍສງົບລົງທັນທີ ຄັນແລ້ວທ່ານປະທານກັມມະການຣາສດອນ ກໍກ່າວຄຳປາໃສຕໍ່ປະຊາຊົນ ຊີ້ແຈງເຖິງເຫດການຂອງປະເທດຊາດບ້ານເມືອງໃນປັ່ດຈຸບັນ ແລະຈຸດປະສົງຂອງຄນະກັມມະການຣາສດອນ ທີ່ໄດ້ເຊີນຊວນປະຊາຊົນທັງຫລາຍໃຫ້ມາຊຸມນຸມ ໃນທີ່ສຸດທ່ານກໍໄດ້ກ່າວສລຸບວ່າ ຂໍໃຫ້ປະຊາຊົນທັງຫລາຍ ຄອຍຟັງຄຳປະກາດຖແລງຂອງຄນະກັມມະການຣາສດອນ ທີ່ຈະໄດ້ອ່ານສູ່ຟັງຕໍ່ໄປ ພໍສຸດສຽງຄຳປາໃສຂອງທ່ານປະທານກັມມະການຣາສດອນ ກໍມີສຽງຕົບມືສແດງຄວາມດີໃຈດັງພ້ອມກັບສຽງໄຊໂຍໂຮ່ຮ້ອງວ່າ "ຂໍໃຫ້ຊາດລາວຈົ່ງຈເຣີນ ຂໍໃຫ້ຄນະຣາສດອນຈົ່ງຈເຣີນ" ຕໍ່ຈາກນັ້ນ ທ້າວທັນ (ນາຍພົລທັນ ໄຊຍະສິດເສນາ) ກໍໄດ້ກ້າວຂຶ້ນສູ່ບັນລັງ ອ່ານຄຳປະກາດຖແລງການຕ່າງ ໆ ຕາມລຳດັບຄື :

1. ຄຳປະກາດເອກຣາດ ແລະອິສຣະພາບແຫ່ງປະເທດລາວ
2. ຄຳປະກາດໂຮມຜືນແຜ່ນດິນລາວເຂົ້າເປັນອັນນຶ່ງອັນດຽວ
3. ຄຳຖແລງການ ກ່ຽວກັບການປ່ຽນແປງການປົກຄອງ
4. ປະກາດໃຊ້ຣັຖທັມມະນູນ ສບັບຊົ່ວຄາວ
5. ປະກາດການແຕ່ງຕັ້ງ ຄນະຣັຖມົນຕຣີ.

ການອ່ານຄຳປະກາດຖແລງການຕ່າງ ໆ ໄດ້ສັ້ນສຸດລົງເວລາ 10 00 ມ. ຂອງວັນທີ 12 ຕຸລາ ໃນທ່າມກາງສຽງໄຊໂຍໂຮ່ຮ້ອງສແດງຄວາມຊື່ນຊົມຍິນດີຂອງປະຊາຊົນລາວ ພໍສຳເຣັດແລ້ວຄນະຜູ້ກໍ່

ການຫລົດນະກັມມະການຣາສດອນ ອັນມີທ່ານພຍາຄຳມ້າວເປັນປະທານ ແລະປະຊາຊົນ ກໍ່ພາກັນແຫ່ແຫນໄປເຝົ້າເຈົ້າເພັຊຣາຊ ທູນໃຫ້ພຣະອົງຊາບເຖິງເຫດການປ່ຽນແປງການປົກຄອງເທື່ອນີ້ດ້ວຍ ເຈົ້າເພັຊຣາຊກໍ່ໄດ້ສເດັດອອກມາຮັບຕ້ອນຄນະຣາສດອນເປັນອັນດີ ພ້ອມທັງຊີ້ແຈງວ່າ ເວລານີ້ ພຣະອົງທ່ານໝົດໜ້າທີ່ໃນການບໍຣິຫານປະເທດຊາດບ້ານເມືອງ ແລ້ວຕໍ່ນີ້ໄປເປັນໜ້າທີ່ຂອງຣັຖບານໃໝ່ທີ່ຈະໄດ້ຕັ້ງຂຶ້ນໃນອັນນີ້ເປັນຜູ້ຮັບຜິດຊອບໃນໂຊກຊະຕາຂອງປະເທດຊາດສືບຕໍ່ໄປ.

ຕໍ່ຈາກນັ້ນ ຄນະກັມມະການຣາສດອນ ກໍ່ທູນລາເຈົ້າເພັຊຣາຊກັບຄືນມາຈັດຕັ້ງສະພາຜູ້ແທນຣາສດອນຊົ່ວຄາວ ແລະຣັຖບານຂຶ້ນຕາມຣັຖທັມມະນູນທີ່ໄດ້ກຳນົດໄວ້ ໃນການຈັດຕັ້ງສະພາຜູ້ແທນນັ້ນ ຄນະກັມມະການຣາສດອນໄດ້ເຊີນເອົາບັນດາຄນະຜູ້ກໍ່ການທັງຫລາຍ ທີ່ບໍ່ໄດ້ຖືກຄັດເລືອກເຂົ້າເປັນຄນະຣັຖມົນຕຣີ ແລະ ຂ້າຣາຊການ ທະຫານ ຕຳຣວດ ພໍ່ຄ້າ ປະຊາຊົນ ຜູ້ກໍ່ຊົງຄຸນວຸດທິເຂົ້າຮ່ວມເປັນສະມາຊິກນຳ ມີຈຳນວນທັງໝົດ 45 ຄົນ ຈັດຕັ້ງເປັນສະພາຜູ້ແທນຣາສດອນຂຶ້ນ ສະມາຊິກສະພາຜູ້ແທນໄດ້ຄັດເລືອກເອົາ ທ່ານພຍາຄູນ ພິລາວັນ ເປັນປະທານສະພາ ທ້າວຄຳໃບ ພິລາພັນເດຊ ເປັນຮອງປະທານ ແລະໃຫ້ທ້າວຄຳພອນ ພົລຣາຊ ເປັນເລຂາທິການ ເມື່ອໄດ້ຈັດຕັ້ງສະພາຜູ້ແທນຣາສດອນແລ້ວ ຄນະກັມມະການຣາສດອນ ເຊິ່ງເປັນຜູ້ກໍ່ການນັ້ນ ກໍ່ໝົດສະພາບໄປ ຕາມບົດບັນຍັດຣັຖທັມມະນູນ ແລ້ວສະພາຜູ້ແທນຣາສດອນກໍ່ໄດ້ຮັບຮອງເອົາຣັຖບານທີ່ຈັດຕັ້ງແລ້ວນັ້ນ ແລະ ການຈັດຕັ້ງຣັຖບານກໍ່ບໍ່ມີການ

ຫຍຸ້ງຍາກຢ່າງໃດ ເພາະໄດ້ຕົກລົງກັນໄວ້ຮຽບຮ້ອຍແລ້ວ ໂດຍແມ່ນທ່ານພຍາຄຳມ້າວ ປະທານກັມມະການຣາສດອນ (ເກົ່າ) ນັ້ນເອງເປັນນາຍົກຣັຖມົນຕຣີ ປະກອບດ້ວຍຣັຖມົນຕຣີຕ່າງ ໆ ດັ່ງໄດ້ກ່າວມາແລ້ວແຕ່ກ່ອນ, ຈຶ່ງເປັນອັນວ່າ ການປະກາດເອກຣາດ ປະກາດອິສຣະພາບ ຈັດຕັ້ງສະພາຜູ້ແທນຣາສດອນຊົ່ວຄາວ ແລະຣັຖບານເອກຣາດແຫ່ງຊາດລາວຢ່າງສົມບູນ ໄດ້ສຳເຣັດບໍ່ຣະບອນລົງພ້ອມກັນ ໃນວັນທີ 12 ຕຸລາ 1945 ຕາມບົດບັນຍັດແຫ່ງຣັຖທັມມະນູນສະບັບຊົ່ວຄາວ ເຊິ່ງໄດ້ປະກາດໃຊ້ໃນວັນທີ 12 ຕຸລາ ນັ້ນເປັນຕົ້ນມາ.

ເມື່ອໄດ້ຈັດຕັ້ງສະພາຜູ້ແທນຣາສດອນ ແລະປະກອບຄນະຣັຖມົນຕຣີກໍ່ເຮັດຮຽບຮ້ອຍແລ້ວ ຣັຖບານກໍ່ໄດ້ໂທຣະເລກໄປແຈ້ງໃຫ້ນາໆປະເທດຮັບຮູ້ຄວາມເປັນເອກຣາດ ແລະອິສຣະພາບຂອງລາວ ພາກົດວ່າມີແຕ່ປະເທດວຽດນາມທີ່ນັ້ນທີ່ໄດ້ຮັບຮູ້ ແລະໄດ້ໂທຣະເລກຕອບມາ ນອກຈາກນີ້ ທາງຣັຖບານກໍ່ໄດ້ຈັດສົ່ງຄນະກັມມະການພິເສດພ້ອມດ້ວຍກຳລັງທະຫານຂຶ້ນໄປຫລວງພຣະບາງ ເພື່ອກາບທູນທຳຄວາມເຂົ້າໃຈກັບພຣະເຈົ້າແຜ່ນດິນ ແຕ່ກັມມະການພິເສດຂອງຣັຖບານຍັງໄປບໍ່ທັນຮອດນະຫລວງພຣະບາງ ຊາວຫລວງພຣະບາງ ອັນມີເຈົ້າບຸນຍະອັດ ເປັນຫົວໜ້າ ກໍ່ໄດ້ພາກັນເຂົ້າທູນສົມເດັດພຣະເຈົ້າສີສວ່າງວົງສ໌ ແລ້ວພຣະອົງກໍ່ໄດ້ຂໍລາຣາຊສົມບັດ ໂດຍອ້າງວ່າ ສຸຂພາບບໍ່ສົມບູນ ເນື່ອງຈາກໄດ້ທົງດຳເນີນພາຣະກິດມານານ ປະກອບກັບທັງຊະຣາຫລາຍແລ້ວດ້ວຍ ແຕ່ພຣະອົງບໍ່ໄດ້ທົງແຕ່ງຕັ້ງຜູ້ໃດໃຫ້ເປັນກະສັດສືບຣາຊສົມບັດ

ແທນ ຕໍ່ມາເຖິງວັນທີ 15 ພຶສຈິກາ (ໂນວາມເບີຣ) ພຣະເຈົ້າ ສຣີສວ່າງວົງສ໌ ອະດີດກະສັດ ຈຶ່ງໄດ້ສົ່ງບັນທຶກໃຫ້ຄຳໝັ້ນສັນຍາ 3 ຂໍ້ ແກ່ຣັຖບານ ອັນມີພະຍາ ຄຳມ້າວ ເປັນນາຍົກຣັຖມົນຕຣີ ດັ່ງມີຂໍ້ ຄອຕໍ່ໄປນີ້.

1- ຂ້າພະເຈົ້າສຣີສວ່າງວົງສ໌ ໄດ້ຮັບຢູ່ໃຕ້ຄວາມປົກຄອງ ຂອງປະເທດລາອຢ່າງແທ້ດິງ

2- ເມືອເວລາຂ້າພະເຈົ້າເປັນພຣະເຈົ້າຢູ່ນັ້ນ ບໍ່ໄດ້ເຄີຍ ເຊັນສັນຍາ ( ) ກັບຣັຖທູດຝຣັ່ງເສດຜູ້ນຶ່ງຜູ້ໃດ ເລີຍທີ່ກ່ຽວກັບປະເທດຊາດລາວ.

3- ຣັຖບານໃໝ່ນີ້ ໄດ້ຕັ້ງຂຶ້ນໂດຍປະການໃດກໍດີ ຂ້າເຈົ້າ ບໍ່ຢາກອາຄາດພະຄາດແກ່ຄົນະຣາສດອນ ຜູ້ໃດຈັດຕັ້ງ ຂຶ້ນແຕ່ຢ່າງໃດເລີຍ ຂໍໃຫ້ອະໄພລືເສີກແລ້ວແກ່ກັນໄປ ດັ່ງນັ້ນຂ້າພະເຈົ້າຈຶ່ງໄດ້ທຳໜັງສືສະບັບນີ້ໄວ້ເປັນສຳຄັນ.

ຫລວງພຣະບາງ, 10 ພຶສຈິກາ 2488

(ລົງພຣະນາມ) ສຣີສວ່າງວົງສ໌

ດັ່ງນີ້ ຈຶ່ງເປັນອັນວ່າ ຣັຖບານລາວອິສຣະ ທີ່ໄດ້ຕັ້ງຂຶ້ນໃນ ຄາວນັ້ນ ເປັນທີ່ຣັຖບານທີ່ຕັ້ງຂຶ້ນໂດຍຊອບດ້ວຍກົດໝາຍ ແລະນິຕິ ປະເພນີທຸກປະການ.

ດຳເນີນງານຂອງຣັຖບານ

## (1) ການຈັດຕັ້ງສະມາຄົມລາວເປັນລາວ

ເມື່ອໄດ້ທຳການປະຕິບັດການປະກາດເອກຣາດ ແລະອິສຣະພາບ, ຈັດຕັ້ງສະພາຜູ້ແທນຣາສດອນ ແລະຣັຖບານສຳເຣັດຮຽບຮ້ອຍແລ້ວ ຄນະກັມະການຣາຊດອນ ເຊິ່ງເປັນຜູ່ກໍ່ການນັ້ນ ກໍໄດ້ຫຍຸບຕົນລົງຕາມຣັຖທັມະນູນ ມາຕຣາ 14 ຄນະກັມະການຣາສດອນນີ້ ກໍໄດ້ຮັບເລືອກເອົາເປັນຜູ່ແທນຣາສດອນເປັນສ່ວນມາກໃນເວລານັ້ນ ໄດ້ມີສຽງວິພາກວິຈານກັນໄປໃນທາງທີ່ບໍ່ເປັນມຸງຄຸນບາງປະການ ຄື ລາງຄົນຍັງມີໃຈຝັກໄຝ່ນຳຝຣັ່ງເສດຢູ່ກໍມີ ແລະບາງຄົນກໍຖືກຫາວ່າໄປນິຍົມແກວ ລາງພວກກໍຖືກຫາວ່າໄປນິຍົມໄທຍ໌ ຈຶ່ງໄດ້ມີຄວາມໃຫ້ນັບວ່າ ລາວເປັນແກວກໍມີ ລາວເປັນຝຣັ່ງເສດກໍມີເພື່ອກຳຈັດບັດເປົ້າຄວາມເວົ້າໃຫ້ກັນແລະເພື່ອຄວາມສາມັກຄີພັນທັງຂອງຄົນໃນຊາດ ຄນະຜູ່ກໍ່ການທີ່ໄດ້ຫຍຸບຕົວລົງແລ້ວນັ້ນ ຈຶ່ງໄດ້ພ້ອມກັນຈັດຕັ້ງສມາຄົມນຶ່ງຂຶ້ນ ເປັນສມາຄົມການເມືອງ ຮຽກຊື່ວ່າ "ສມາຄົມລາວເປັນລະວ" ໃຫ້ອັກສອນຫຍໍ້ວ່າ ສມາຄົມ "ລ.ປ.ລ." ທັງນີ້ເພື່ອສນັບສນູນຣັຖບານໃຫ້ເຂັ້ມແຂງໃນທຸກກໍຣະນີ ສະມາຄົມນີ້ ຕັ້ງຢູ່ທີ່ເຮືອນຂອງ ທ້າວຄຳໃບ ນິລາພັນເດຊ ໃນນະຄອນວຽງຈັນທນ໌ ໂດຍຄວາມເອື້ອເຟື້ອຊ່ອຍເຫລືອຂອງ ທ້າວຄຳໃບເອງ ປະທານຂອງສມະຄົມແມ່ນ ພ.ທ. ບົງ ສຣິຣັຕຕະນະກຸນ ຂອງປະທານແມ່ນ ທ້າວຄຳໃບ ນິລາພັນເດຊ ທີ່ປຶກສາຂອງສມາຄົມແມ່ນ ທ້າວອັນພອນ ນິລຣາຊ ປະກອບດ້ວຍກັມການ

ເຊິ່ງເປັນຜູ້ກໍ່ການ 8 ຄົນ ແລະເລຂາທຸການ 3 ຄົນ ສມາຄົມນີ້ ໄດ້ຂຍາຍສາຂາອອກໄປໃນແຂວງຕ່າງໆ ໃນທັນທີທັນໃດ ຄື:-

1- ແຂວງຫລວງພຣະບາງ ແມ່ນ ເຈົ້າສີສຸມັງ ສຣີສເລີມສັກ ເປັນປະທານ ປະກອບດ້ວຍຄນະກັມະການ ຄື:-
- ເຈົ້າບຸນຍະວັດ ເຈົ້າແຂວງຫລວງພຣະບາງ, ທ່ານຣ້ອຍຕຣີ ອຸ່ນແກ້ວ (ຍົດສມັຍນັ້ນ) ແລະທ່ານ ພ.ຕ. ອ້ວນ (ນາຍພົລ ອ້ວນ ຣາທິກຸນ) ເປັນຕົ້ນ

2- ແຂວງ ສວັນເຂດ ແມ່ນ ທ່ານ ອຸ່ນ ເປັນປະທານ ປະກອບດ້ວຍບຸກຄົນສຳຄັນ ຄື ພ.ຕ. ພູມີ (ນາຍພົລ ພູມີ ໜໍ່ສວັນ) ທ່ານຊຸ ວໍຣະວົງສ໌, ທ່ານໜູອິ້ງ ຣັຕນະສມັຍ, ທ່ານຕຸລັນ, ທ້າວສີຊະນະ ສີສານ, ທ້າວໄອຄຳ ອະນຸຣັກ, ທ້າວພອກ, ທ້າວຕັນ ເປັນຕົ້ນ.

3- ແຂວງຈຽງຂວງ ແມ່ນທ່ານພູມີ ວົງວິຈິດ ເປັນປະທານ ປະກອບດ້ວຍຄນະກັມະການອື່ນໆອີກຫລາຍທ່ານ.

4- ແຂວງຄຳມ່ວນ ແມ່ນເຈົ້າສຸພານຸວົງສ໌ ເປັນປະທານ ປະກອບດ້ວຍຄນະກັມະການອື່ນໆອີກເປັນອັນມາກ ເມື່ອໄດ້ຕັ້ງສມາຄົມ ລ.ປ.ລ. ຂຶ້ນແລ້ວ ສມາຄົມນີ້ ກໍໄດ້ຈັດຕັ້ງກອງທັບຣາສດອນຂຶ້ນ ເພື່ອຕ້ານກຳລັງຂອງຝຣັ່ງເສດຊ່ອຍເຫລືອກອງທະຫານ ຂອງຣັຖບານທີ່ມີຢູ່ພຽງ

ພ້ອຍດຽວ ພາຍໃຕ້ການນຳຂອງທ່ານນາຍພົລສິງ ກອງທັບຣາສດອນນີ້ ໄດ້ຕັ້ງຂຶ້ນຕາມແຂວງໃຫຍ່ໆດີ ແຂວງວຽງຈັນ ນຳໂດຍທ້າວອັມພອນ ພົລຣາຊ, ແຂວງທ່າແຂກນຳໂດຍ ເຈົ້າສຸພານຸວົງສ໌ ແລະແຂວງສວັນເຂດ ນຳໂດຍທ່ານອຸ່ນ ຊະນະນິກອນ.

ອີກປະການນຶ່ງ ກິຈການຣົບດ່ອນທີ່ຣັຖບານລາວອິສຣະ ໄດ້ຈັດທຳຂຶ້ນໃນສມັຍນັ້ນ ນອກຈາກການປົກຄອງທັມະດາ ແລະການອື່ນໆແລ້ວ ກໍ່ມີ :–

## (2) *ທຸງຊາດຂອງລາວ*

ເນື່ອງຈາກພຣະມະຫາກະສັດ ສຣີສວ່າງວົງສ໌ ໄດ້ທົງລາອອກຈາກຣາຊສົມບັດ ແລະບໍ່ໄດ້ທົງແຕ່ງຕັ້ງເຈົ້ານາຍອົງນຶ່ງໃຫ້ຂຶ້ນຄອງຣາຊສົມບັດແທນ ແລະຕາມຣັຖທັມະນູນຊົ່ວຄາວ ມາຕຣາ 8 ບົ່ງໄວ້ວ່າ "ເມື່ອຕຳແໜ່ງພຣະມະຫາກະສັດຍັງເທົ່າຫວ່າງຢູ່ ໃຫ້ຄນະມົນຕຣີບໍຣິຫານຣາຊພາຣະນັ້ນໄປຈົນກ່ວາສະພາຜູ້ແທນຣາສດອນ ຈະໄດ້ເຊີນພຣະມະຫາກະສັດຂຶ້ນສເວີຍຣາຊ "ດັ່ງນີ້ ສະນັ້ນ ຄນະຣັຖມົນຕຣີ ຈຶ່ງໄດ້ພິຈາຣະນາເບິ່ງວ່າ ທຸງຊາດຂອງລາວແຕ່ເດີມແທ້ນັ້ນ ຍັງບໍ່ທັນມີໃຈເປັນສ່ວນຮວມຂອງຊາດ ມີແຕ່ທຸງຊ້າງເຜືອກສາມສຽນ ອັນເປັນທຸງປະຈຳອົງພຣະມະຫາກະສັດຫລວງພຣະບາງ ທີ່ມີພຣະນາມມາແຕ່ບູຮານວ່າ "ພຣະເຈົ້າລ້ານຊ້າງຮົ່ມຂາວຫລວງພຣະບາງ" ທ່ານັ້ນ ແລະບັດນີ້

ອົງພຣະມະຫາກະສັດໄດ້ຫົງລາອອກຈາກຣາຊສົມບັດແລ້ວ ຄົນຈະເອົາທຸງຊ້າງເຜືອກສາມສຽນກັ້ງຮົ່ມຂາວ ອັນເປັນທຸງປະຈຳອົງພຣະມະຫາກະສັດມາເປັນທຸງຊາດ ກໍເປັນການບໍ່ສົມຄວນ ແລະບໍ່ເໝາະສົມຄວນ ແລະບໍ່ເໝາະສົມດ້ວຍປະການທັງປວງ ຄນະຣັຖມົນຕຣີ ຈຶ່ງໄດ້ສເນີຍັດຕິເຣື່ອງທຸງຊາດນີ້ຕໍ່ສະພາຜູ້ແທນຣາສດອນ ດັ່ງນັ້ນໃນຣະຫວ່າງປາຍເດືອນຕຸລານີ້ເອງ ສະພາຜູ້ແທນຣາສດອນ ຈຶ່ງໄດ້ປະຊູມກັນພິຈາຣະນາເຣື່ອງທຸງຊາດອັນ ແລະໄດ້ຕົກລົງເຫັນດີເປັນເອກະສັນໃຫ້ໃຊ້ທຸງຊາດເປັນສາມສີ ມີລັກສະນະ ແລະຄວາມໝາຍດັ່ງນີ້:–

1– ພື້ນທຸງສ່ວນກາງ ເປັນສີຟ້າຍາວໄປຕາມທາງນອນສອງຂອກແຜ່ສີຟ້າ ແມ່ນແຜ່ນສີແດງສ່ອນຍາວໆ ກວ້າສ່ວນກວ້າງນຶ່ງສ່ວນສາມ ພື້ນສີຟ້ານີ້ ໝາຍເຖິງຜືນແຜ່ນດິນທີ່ອຸດົມສົມບູນດ້ວຍພືດພັນທັນຍາຫານ ມີສີຂຽວຢູ່ທຸກຣະດູການ ຫລືໝາຍຄວາມວ່າ ພື້ນຟ້າອັນເປັນທີ່ອາໄສຂອງດາວນົບເຄາະທັງຫລາຍເຊິ່ງເປັນຂອງສູງ ຄວນໂຄຣົບນັບຖື.

2– ຢູ່ກາງແຜ່ນຜ້າອັນເປັນສີຟ້ານັ້ນ ແມ່ນແຜ່ນສີຂາວຮູບມົນຄືພຣະຈັນເພັງ ອັນໝາຍເຖິງຄວາມບໍຣິສຸດແຫ່ງຈິດໃຈຂອງຄົນລາວ ແລະໝາຍເຖິງອົງພຣະມະຫາກະສັດຂອງລາວທີ່ມີນາມວ່າພຣະເຈົ້າລ້ານຊ້າງແລະພຸທສາສນາດ້ວຍ

3– ແຜ່ນຜ້າສີແດງ ຢູ່ສອງຂ້າງຂອງສີຟ້ານັ້ນ ມີສ່ວນກວ້າງ

ທີ່ເຄິ່ງນຶ່ງຂອງແຜ່ນສີຟ້າ ສີແດງສອງຂ້າງນັ້ນ ໝາຍເຖິງເລືອດຂອງປະຊາຊົນລາວ ທີ່ຈະຍອມເສັຍສລະເພື່ອຮັກສາພື້ນແຜ່ນດິນອັນຂຽວງາມ ດຸຈດັ່ງພື້ນຟ້ານັ້ນໄວ້ໃຫ້ເປັນອິສຣະເສຣີມີເອກຣາຊຕລອດໄປ.

ນີ້ແມ່ນລັກສະນະ ແລະຄວາມໝາຍຂອງທຸງຊາດລາວ ທີ່ໄດ້ບັນຍັດຂຶ້ນໃນສມັຍນັ້ນ ຕາມມະຕິຂອງຣັຖບານ ແລະຜູ້ແທນຣາສດອນຮ່ວມກັນ.

## (3) *ການເງິນຂອງຣັຖບານລາວອິສຣະ*

ເນື່ອງຈາກວ່າ ພຣະຣາຊອານາຈັກລາວເມື່ອຍັງຢູ່ໃນຄວາມປົກຄອງຂອງຝຣັ່ງເສດນັ້ນ ຣັຖບານຝຣັ່ງເສດໄດ້ບັນຍັດເງິນຕຣາເປັນທະນະບັດຂຶ້ນໃຊ້ໃນປະເທດອິນໂດຈີນຮ່ວມກັນທັງສາມປະເທດ ແລ້ວຝຣັ່ງເສດໄດ້ແບ່ງສ່ວນເອົາມາໃຊ້ໃນປະເທດລາວ ຕາມກຳນົດທີ່ທາງການຝຣັ່ງເສດໄດ້ກຳນົດເອົາໄວ້ ເມື່ອຍີ່ປຸ່ນເຂົ້າຍຶດເອົາປະເທດລາວຈາກຝຣັ່ງເສດ ພວກຝຣັ່ງເສດທີ່ແຕກໜີ ກໍ່ໄດ້ກອບຂົນເອົາຈົນໝົດເຫລືອຢູ່ໃນຄັງບໍ່ພໍທີ່ໃດ ແລະເມື່ອຍີ່ປຸ່ນຖອນອອກຈາກລາວ ຍີ່ປຸ່ນກໍ່ຂົນເອົາໜີອີກ ເມື່ອຣັຖບານລາວອິສຣະທີ່ຕັ້ງຂຶ້ນນັ້ນ ຈຶ່ງບໍ່ມີເງິນເຫລືອຢູ່ໃນຄັງພໍແສນກີບຊ້ຳ ແລະໃນຄນະທີ່ໄດ້ຮັບຄວາມຜິດເຄືອງແສນສາຫັດດັ່ງນີ້ ທາງສະມາຄົມ ສ.ປ.ລ. ຈຶ່ງໄດ້ຂໍອະນຸຍາດຕໍ່ຣັຖບານທຳການເອີ້ຍໄລ່ເງິນຈາກຣາສດອນທົ່ວປະເທດ ເພື່ອເອົາມາໄວ້ໃຊ້ຈ່າຍຊື້ອາວຸດ ຂນະ

ດຽວກັນ ຣັຖບານກໍໄດ້ຕິດຕໍ່ໄປທາງປະເທດວຽດນາມ ຂໍແບ່ງສ່ວນເງິນທີ່ໂຮມກັນຢູ່ນັ້ນ (ເຊິ່ງແຕ່ກ່ອນຝຣັ່ງເສດເຄີຍປະງົບປະມານໄວ້ໃຊ້ໃນປະເທດລາວມີປະມານ 4 ລ້ານກີບ) ມາໃຊ້ ແຕ່ກໍຍັງບໍ່ທັນໄດ້ຮັບ ຕ້ອຍຄວາມຈຳເປັນຣັຖບານ ຈຶ່ງໄດ້ຄິດພິມທະນະບັດໃບລະ 40 ອັດ ແລະໃບລະ 10 ກີບຂຶ້ນໃຊ້ເປັນການຊົ່ວຄາວ ເຊິ່ງກໍໄດ້ຮັບຄວາມນິຍົມເປັນອັນມາກ.

## (4) ຈັດຕັ້ງໂຮງຮຽນນາຍຮ້ອຍຊົ່ວຄາວ

ບັນຫາອັນໜັກໜ່ວງທີ່ສຸດອີກອັນນຶ່ງ ຂອງຣັຖບານໃນຂະນະນັ້ນ ກໍແມ່ນ ຣັຖບານຍັງບໍ່ມີກຳລັງທະຫານທີ່ແທ້ຈິງ ພໍຈະຕ້ານທານຝຣັ່ງເສດໄດ້ຄົນລາວທີ່ເຄີຍເປັນທະຫານຢູ່ນຳຝຣັ່ງເສດແຕ່ກ່ອນນັ້ນ ກໍບໍ່ມີຜູ້ໃດໄດ້ຮັບຍົດເຖິງນາຍຮ້ອຍຈັກຄົນ ມີແຕ່ພຽງແຕ່ຊັ້ນນາຍຈ່າທໍ່ນັ້ນ ເພື່ອຈະໃຫ້ມີນາຍທະຫານຜູ້ທຳການແອບຝຶກ ແລະຮູ້ຈັກຫລັກຍຸທວິທີ ຕລອດຮອດການໃຊ້ອາວຸດ ຣັຖບານຈຶ່ງໄດ້ຈັດຕັ້ງໂຮງຮຽນນາຍຮ້ອຍຊົ່ວຄາວຂຶ້ນເມື່ອວັນທີ 25 ພຶສຈິກາ ໂດຍມີຫລັກສູດອົບຮົມພຽງ 3 ເດືອນ ແລະໃນການນີ້ ທາງສມາຄົມ ລ.ປ.ລ. ຈຶ່ງໄດ້ຕິດຕໍ່ເອົານາຍທະຫານໄທຍ໌ (ຄົນອິສານ) ນາຍຮ້ອຍເອກ ເກັ່ງ ມາເປັນຄູສອນ ນາຍຮ້ອຍເອກ ເກັ່ງ ຄົນນີ້ ເຄີຍໄດ້ເຂົ້າສນາມຣົບທາງດ້ານເມືອງຈຽງຕຸງມາແລ້ວ ຈຶ່ງນັບວ່າເປັນບຸກຄົນສາມາດກ້າຫານເອົາການດີຢູ່ ບັນດານັກຮຽນນາຍຮ້ອຍໃນສມັຍນັ້ນ ໄດ້ເປັນນາຍພົລໃນສມັຍນີ້ກໍມີຫລາຍຄົນຢູ່ ນີ້ກໍແມ່ນວຽກການຫລືແນວທາງອັນນຶ່ງທີ່ຣັຖບານລາວອິສຣະ ໄດ້ທຳໄວ້ໃນຄັ້ງນັ້ນ.

## ບົດທີ່ ໖

## ການຣົບຣະຫວ່າງລາວຝຣັ່ງເສດ

ເຖິງແມ່ນປະຊາຊົນຊາດລາວທັງຫລາຍ ໄດ້ຮ່ວມຈິດຮ່ວມໃຈກັນປະກາດເອກຣາດ ອິສຣະພາບ ແລະໄດ້ຈັດຕັ້ງຣັຖບານ ຕລອດຈົນສະພາຜູ້ແທນຣາສດອນຂຶ້ນຕາມແບບການປົກຄອງປະເທດປະຊາທິປະໄຕທັງຫລາຍໃນໂລກ ດັ່ງໄດ້ກ່າວມາແລ້ວນັ້ນກໍດີ ແຕ່ໃນຣະຍະນັ້ນ ຍັງບໍ່ມີປະເທດໃດຮັບຮອງຄວາມເປັນເອກຣາດ ແລະ ອິສຣະພາບຂອງລາວເລີຍ ມີແຕ່ປະເທດວຽດນາມ ເຊິ່ງມີສະພາບຄືກັນກັບລາວໄດ້ຮັບຮູ້ ແຕ່ກໍບໍ່ມີປະເທດໃດຄັດຄ້ານເລີຍ ນອກຈາກປະເທດຝຣັ່ງເສດປະເທດດຽວທໍ່ນັ້ນ ການທີ່ຝຣັ່ງເສດບໍ່ຍອມຮັບຮູ້ເອກຣາດ ແລະຣັຖບານຂອງລາວໃນຄັ້ງນັ້ນ ກໍຍ້ອນຝຣັ່ງເສດຖືວ່າ ພຣະເຈົ້າສີສວ່າງວົງສ໌ ຜູ້ເປັນປະມຸກຂອງຊາດ ໄດ້ຍິນຍອມໃຫ້ຝຣັ່ງເສດເຂົ້າມາປົກຄອງຢູ່ຕາມເດີມນັ້ນເອງ ດັ່ງນີ້ ພວກຝຣັ່ງເສດກໍແຕກໜີແຕ່ຄາວຍີ່ປຸ່ນເຂົ້າມາຍຶດເອົາປະເທດລາວນັ້ນ ຈຶ່ງໄດ້ຫວນກັບມາຕັ້ງເປັນກອງທັບຂຶ້ນຢູ່ຕາມພູຜາປ່າໄມ້ ແລະດົງດອນ ແລ້ວເກັ້ຽກ່ອມເອົາຄົນລາວຕາມບ້ານນອກເຂົ້າເປັນທະຫານຕື່ມອີກ ກອງທະຫານຝຣັ່ງເສດກອງນຶ່ງ ໄດ້ຕັ້ງຢູ່ພູເຂົາຄວາຍ ແລ້ວເຄື່ອນຍ້າຍເຂົ້າມາຍຶດເອົາເມືອງທຸຣາຄົມໄວ້ ເມື່ອຣັຖບານບໍ່ມີທາງທີ່ຈະເຈຣະຈາກັບຝຣັ່ງເສດໂດຍທາງສັນຕິວິທີໄດ້ແລ້ວ ກໍຈຳເປັນຕ້ອງໄດ້ຕໍ່ຕ້ານດ້ວຍກຳລັງ ດັ່ງນັ້ນ ການປະທະກັນດ້ວຍກຳລັງອາວຸດຣະຫວ່າງຣັຖບານລາວອິສຣະ ກັບ ຝຣັ່ງເສດ ຈຶ່ງໄດ້ເກີດຂຶ້ນຕາມລຳດັບ ດັ່ງນີ້ :

# ການຣົບຄັ້ງທີ 1

## ຣົບທີ່ບ້ານເກີນ (ເມືອງທຸຣະຄົມ)

ເມື່ອກອງທະຫານຝຣັ່ງເສດ ອັນມີກຳລັງພົລປະມານ 500 ຄົນ ເຂົ້າຍຶດເອົາເມືອງທຸຣະຄົມໄວ້ໄດ້ແລ້ວ ຣັຖບານຈຶ່ງໄດ້ສັ່ງກອງທັບຣາສະດອນອອກທຳການໂຈມຕີແບບກອງໂຈນ ກອງທະຫານຣາສດອນທີ່ຍົກໄປເທື່ອນີ້ມີກຳລັງພຽງ 160 ຄົນທ່ານັ້ນ ໂດຍແມ່ນທ້າວອັມພອນ ພົສຣາຊ ເປັນຫົວໜ້າ ສ່ວນອາວຸດນັ້ນກໍມີແຕ່ອາວຸດແປບເກົ່າ ໆ ເຊິ່ງເກັບໄດ້ຈາກຍີ່ປຸ່ນ ຄັນເຖິງວັນທີ 15 ພຶສຈິກາ ພ.ສ. 2488 ກອງທະຫານລາວໄດ້ຍົກອອກສະໜາມບິນບ້ານສີໄຄ ວັນທີ 19 ພຶສຈິກາ ໄດ້ເຂົ້າໂຈມຕີຝຣັ່ງເສດຢູ່ທີ່ເມືອງທຸຣະຄົມ ໄດ້ຕໍ່ສູ້ກັນຢູ່ເຖິງ 3 ວັນ ກອງທະຫານຝຣັ່ງເສດຈຶ່ງແຕກຖອຍອອກຈາກເມືອງໄປ ແລະ ຖິ້ມປະອາວຸດ ສະບຽງອາຫານໄວ້ເປັນອັນມາກ ກອງທະຫານລາວກອດເກັບເອົາອາວຸດໄດ້ແລ້ວຈຶ່ງຖອຍອອກມາຕັ້ງຢູ່ເມືອງໂພນໂຮງ ເຫດທີ່ຖອຍ ກໍເນື່ອງຈາກວ່າພວກເຮົາມີກຳລັງໜ້ອຍກວ່າເຂົາຫລາຍ ຢ້ານວ່າເຂົາຈະຫລອນຣົບມາຕີອີກ ເມື່ອກອງທະຫານລາວຖອຍອອກມາແລ້ວໄດ້ຫລາຍວັນ ກອງທະຫານຝຣັ່ງເສດຈຶ່ງໄດ້ເຂົ້າມາຍຶດເອົາເມືອງທຸຣະຄົມອີກ ແລ້ວຕັ້ງແຕ່ນັ້ນມາ ຝຣັ່ງເສດກໍໄດ້ລຳລຽງພົລມາໂດຍທາງເຄື່ອງບິນຢູ່ສເມີ.

## ການຣົບທີ່ທ່າເດື່ອ

ເມື່ອວັນທີ່ 3 ມະກະຣາ ກອງທະຫານຝຣັ່ງເສດຈຳນວນພົລ ປະມານ 600 ຄົນ ໄດ້ເຄື່ອນຍ້າຍກຳລັງເຂົ້າມາຍຶດເອົາບ້ານທ່າເດື່ອອັນ

ເຂັ້ມດ່ານ ຢູ່ກົງກັນຂ້າມກັບຈັງຫວັດໜອງຄາຍ ປະເທດໄທຍ ທະຫານລາວທີ່ຮັກສາດ່ານມີພຽງ 10 ຄົນທ່ານັ້ນ ແລະເວລານັ້ນ ປະຊາຊົນກຳລັງມ່ວນຊື່ນດ້ວຍການເຮັດບຸນຫາຣາຍໄດ້ຊ່ວຍເຫລືອຣັຖບານ ທະຫານທີ່ຮັກສາດ່ານໄດ້ເຫັນດັ່ງນັ້ນ ຈຶ່ງໄດ້ໂທຣະຊັບແຈ້ງເຫດມາໃຫ້ກອງບັນຊາການທີ່ວຽງຈັນຊາບ ກອງບັນຊາການໄດ້ຮັບຣາຍງານແລ້ວ ກໍໄດ້ແຈ້ງໃຫ້ຜູ້ບັນຊາການທະຫານຈີນທີ່ປະຈຳຢູ່ວຽງຈັນຊາບ ຝ່າຍທະຫານຈີນເມື່ອໄດ້ຊາບແລ້ວ ກໍນຳອອກໄປທີ່ບ້ານທ່າເດື່ອ ເພື່ອຊາບຄວາມມຸ້ງໝາຍຂອງຝຣັ່ງເສດທີ່ຍົກມາ ແລະເພື່ອປະສົງຈະຫ້າມໄວ້ ຂໍເຈຣະຈາກັນກ່ອນ ແຕ່ພໍທະຫານຈີນໄປເຖິງຍັງບໍ່ທັນໄດ້ເຈຣະຈາກັບຝຣັ່ງເສດກໍໄດ້ຫຸ້ມຍິງຣົຖຜູ້ແທນທະຫານຈີນ ເຊິ່ງປັກທຸງຈີນໄວ້ແລ້ວຢ່າງເປີດເຜີຍເມື່ອເຫດການເປັນດັ່ງນັ້ນ ຜູ້ແທນຝ່າຍຈີນ ຈຶ່ງຖອຍກັບຄືນວຽງຈັນ ແຈ້ງໃຫ້ກອງທະຫານລາວຊາບ ຝ່າຍດ້ານທະຫານວຽດນາມທີ່ຢູ່ໃນວຽງຈັນເຊິ່ງໄດ້ສົ່ງກຳລັງອອກໄປຕ້ານຍັນທັນທີ ແລ້ວກໍໄດ້ພົບກັບທະຫານຝຣັ່ງເສດໃນເວລາ 17.00 ມ. ຂອງວັນທີ 3 ມະກະຣາ ນັ້ນເອງ ທຳອິດຝຣັ່ງເສດໄດ້ປຽບເພາະເປັນຝ່າຍເຂົ້າຍຶດ ແລະໄດ້ຍຶດຍຸທພູມທີ່ເໝາະສົມກ່ອນ ນອກຈາກນີ້ ຝຣັ່ງເສດຍັງມີອາວຸດທີ່ທັນສມັຍຫລາຍກວ່າຝ່າຍລາວເຖິງ 10 ຕໍ່ 1 ແຕ່ເມື່ອທີ່ການຣົບກັນໄດ້ດຳເນີນໄປພຽງ 3 ຊົ່ວໂມງທ່ານັ້ນ ຝຣັ່ງເສດກໍຖອຍລົງໄປຍຶດຝັ່ງແມ່ນ້ຳຂອງເປັນບ່ອນກຳບັງສຳລັບຕໍ່ສູ້ ເມື່ອຝຣັ່ງເສດຖອຍນັ້ນ ໄດ້ເອົາໄຟຈູດເຜົາເຮືອນຊານຂອງປະຊາຊົນໄໝ້ໄປຫລາຍສິບຫລັງ ກອງທະຫານລາວຈຶ່ງຣະດົມຍິງຂນາດ

ໜັກ ແລະກຍັບແກຍັເຂົ້າໄປ ຝຣັ່ງເສດຈຶ່ງຖອຍໄປຈົນຕາແຈຢູ່ຝັ່ງຂອງ ຈຶ່ງແຕກຊະຊາຍ ລາງພວກໄປຂີ່ເຮືອຂ້າມຟາກໄປເມືອງໄທຍ ພ້ອມທັງຂົນເອົາທະຫານທີ່ບາດເຈັບໄປນໍາເປັນອັນມາກ ການຣົບກັນໄດ້ດໍາເນີນໄປຕລອດຄືນ ຈົນເຖິງເວລາ 4 00 ມ. ຂອງວັນທີ 4 ມະກະຣາ ສຽງປືນຂອງຝ່າຍຝຣັ່ງເສດກໍ່ມິດງຽບໄປ ຈົນເຖິງເວລາ 5.45 ມ. ຝ່າຍລາວຈຶ່ງລຸກເຂົ້າໄປຈົນເຖິງຝັ່ງຂອງ ກໍ່ໄດ້ພົບເຫັນແຕ່ຊາກສົບຂອງທະຫານຝຣັ່ງເສດນອນຕາຍຢູ່ເດັຽຣະດາດ ສ່ວນທີ່ເຫລືອຕາຍໄດ້ພາກັນແຕກໜີໄປພົດຕັ້ງແຕ່ຍັງບໍ່ທັນແຈ້ງສວ່າງ ຝ່າຍລາວຍຶດໄດ້ອາວຸດທີ່ຝຣັ່ງເສດປະຖິ້ມໄວ້ມີ ປືນຄົກ 5 ກະບອກ ປືນກົນໜັກ 10 ກະບອກ ປືນນ້ອຍຍາວ 300 ກະບອກ ລູກຣະເບີດມື ແລະລູກປືນອີກຫລາຍພັນລູກ.

## *ການຣົບຄັ້ງທີ່ 3 ຢູ່ບ້ານເກີນ*

ນັບແຕ່ຝຣັ່ງເສດເສັຽໄຊຢູ່ທີ່ບ້ານທ່າເດື່ອແລ້ວ ຝຣັ່ງເສດກໍ່ໄດ້ຖອຍໄປໂຮມກັນຢູ່ທາງເມືອງທຸຣະຄົມ ແລະໄດ້ແບ່ງກໍາລັງອອກເປັນກອງ ເພື່ອເຂົ້າຕີເອົາວຽງຈັນ ພ້ອມທັງໄດ້ຂົນທະຫານມາຕື່ມໂດຍທາງອາກາດຢູ່ສເມີ ໆ ກອງໜ້າຂອງຝຣັ່ງເສດ ໄດ້ເຂົ້າມາຕັ້ງຢູ່ບ້ານທ່າງ່ອນທາງຝາກນ້ຳງື່ມ ສ່ວນທະຫານລາວກໍ່ໄດ້ອອກຣົບກວນໂຈມຕີຢູ່ບໍ່ໄດ້ຂາດ ຕໍ່ມາເຖິງວັນທີ 22 ມະກະຣາ ພ.ສ. 2488 ນັ້ນເອງ ກອງທະຫານລາວພ້ອມທະຫານວຽດນາມ ກໍ່ໄດ້ຍົກອອກໄປໂຈມຕີຝຣັ່ງເສດ ທີ່ຕັ້ງຢູ່ເມືອງທຸຣະຄົມ (ບ້ານເກີນ) ໃນຂັ້ນແລກຂອງທະຫານລາວເປັນຝ່າຍລ້ອມຝຣັ່ງ

ເສດໄວ້ເປັນຮູບວົງມົນ ແຕ່ອ້ອມບໍ່ຈອດ ແລ້ວກໍໄດ້ຍິງສູ້ຣົບກັນເຖິງ 2 ວັນ ພໍເຖິງວັນທີ 24 ມະກະຣາ ເວລາ 5 ໂມງເສດ ກອງທະຫານຝຣັ່ງເສດອີກກອງນຶ່ງທີ່ຕັ້ງຢູ່ທາງບ້ານທົ່ງພັ້ງໄດ້ຍົກມາຕີໂອບກອງທະຫານລາວທັງດ້ານຫລັງ ກອງທະຫານລາວຈຶ່ງຕົກຢູ່ໃນທີ່ລ້ອມ ຈົນເຖິງເວລາ 10 ໂມງ ຈຶ່ງຕີແຫກວົງລ້ອມອອກມາໄດ້ ໃນການຣົບເທື່ອນີ້ ຝ່າຍລາວໄດ້ເສັຽກຳລັງພົລໄປເປັນອັນມາກ ເພາະອາວຸດຂອງທະຫານລາວລ້ວນແຕ່ເປັນອາວຸດເກົ່າ ໆ ທັງມອນ ຕັ້ງແຕ່ນັ້ນມາ ກອງທະຫານລາວຈຶ່ງໄດ້ປ່ຽນວິທີການເປັນແບບກອງໂຈນ ທ່ຽວຊອກໂຈມຕີຝຣັ່ງເສດເປັນຄັ້ງເປັນຄາວທ່ນັ້ນ ດັ່ງນັ້ນ ໃນຕອນນີ້ກໍມີຄົນລາວຜູ້ພັກດີຕໍ່ຝຣັ່ງເສດ ແລະຜູ້ຫວັງເອົາຕົວລອດ ໄດ້ລອບລັກອອກໄປຫາກອງທະຫານຝຣັ່ງເສດຫລາຍຄົນ.

## *ປະເທດວຽດນາມປ່ຽນທ່າທີ*

ໃນບັນດາປະເທດຫົວເມືອງຂຶ້ນຂອງຝຣັ່ງເສດ ທີ່ຢູ່ໃນອິນໂດຈີນນຳກັນຄື: ວຽດນາມ, ຂເມນ, ລາວ, ປະເທດວຽດນາມນັບວ່າມີຄວາມສຳຄັນຍິ່ງ ເພາະມີພົລະເມືອງຫລາຍ ແລະຊາວວຽດນາມເອງ ກໍໄດ້ພຍາຍາມກູ້ເອກຣາດຄືນມາແລ້ວຫລາຍຄັ້ງຫລາຍຫົນ ແລະໃນການກູ້ເອກຣາດຂອງປະຊາຊາດອິນດູຈີນຄາວນີ້ ກໍແມ່ນປະເທດວຽດນາມເປັນຜູ້ນຳໜ້າ ດັ່ງນັ້ນ ຊາວວຽດນາມ ຈຶ່ງໄດ້ສູ້ຣົບກັບຝຣັ່ງເສດຢ່າງໜັກຕລອດມາພ້ອມກັນກັບລາວ ແຕ່ພໍມາເຖິງວັນທີ 6 ມີນາ ພ.ສ. 2488 ພວກວຽດນາມ

ຈະໄດ້ຫລົງຄາຣົມຂອງຝຣັ່ງເສດ ຢ່າງໃດບໍ່ຮູ້ຈຶ່ງໄດ້ມີການຕົກລົງທຳສັນຍາກັນຣະຫວ່າງຂ້າຫລວງໃຫຍ່ຂອງຝຣັ່ງເສດ ກັບ ຣັຖບານວຽດນາມ ອັນມີທ່ານ ໂຮຈິມິນ ເປັນປະມຸກ ຂໍ້ຄວາມໃນສັນຍານັ້ນມີ ດັ່ງນີ້ :

1. ຣັຖບານຝຣັ່ງເສດຮັບຮອງວ່າ ຣັຖບານວຽດນາມເປັນຣັຖບານອິສຣະ ມີຣັຖບານ, ມີງົປະມານແຜ່ນດິນ, ມີກອງທັບ ແລະສະພາຂອງຕົນເອງ, ຣັຖບານນີ້ ຈະຢູ່ໃຕ້ອຳນາດຂອງຣັຖບານວຽດນາມ ແລະສມາຄົມຝຣັ່ງເສດ ສ່ວນການໂຮມວຽດນາມທັງສາມພາກເຂົ້າເປັນອັນນຶ່ງອັນດຽວກັນນັ້ນ ໃຫ້ເປັນໄປຕາມປະຊາມະຕິ.

2. ຣັຖບານວຽດນາມ ຈະຍອມຮັບຮອງຣັຖບານຝຣັ່ງເສດໃນຖານະສະຫາຍ ເມື່ອຈີນຖອນອອກໄປແລ້ວ ແລະມີສັນຍາອີກສະບັບນຶ່ງກຳນົດໜ້າທີ່ໃນການປະຕິບັດທັງສອງຝ່າຍ.

3. ຂໍ້ຕົກລົງດັ່ງກ່າວນັ້ນ ໃຫ້ໃຊ້ໄດ້ທັນທີ ແລະເມື່ອໄດ້ແລກປ່ຽນສັນຍາບັນກັນແລ້ວ ຈະໄດ້ອອກຄຳສັ່ງທົ່ວໄປ ແລະຂະນະນີ້ ໃຫ້ກອງທະຫານທັງສອງຝ່າຍຕັ້ງຢູ່ບ່ອນເກົ່າ, ໃນການເຈຣະຈາຕໍ່ໄປໄດ້ຕົກລົງກັນໃນເຣື່ອງການທູດຂອງວຽດນາມກັບນານາປະເທດ, ຣະບອບການປົກຄອງວຽດນາມແລະຣະບອບການເສຖກິດ.

ແລະຍັງໄດ້ມີສັນຍາ ຣະຫວ່າງຝຣັ່ງເສດ ກັບ ວຽດນາມອີກສະບັບນຶ່ງ ກ່າວດ້ວຍການຮັບມອບໜ້າທີ່ຂອງກອງທະຫານຝຣັ່ງເສດແທນທະຫານຈີນ ຂໍ້ຄວາມສຳຄັນ ມີດັ່ງນີ້ :

1. ໄດ້ມີການຕົກລົງກັນ ຣະຫວ່າງຜູ້ກ່ຽວຂ້ອງຂອງທັງສອງຝ່າຍໃນການຍິນຍອມ.